# ທ້າວທ່ໜ້ບີນຮ້ຍ



ວຽງຈັນ, ຫໍ່ສມຸດແຫ່ງຊາດ, ໑໙໖໗.

# ຫົວກ່ພັກປີນຮ້ຍ



ວຽງຈັນ, ຫໍສມຸດແຫ່ງຊາດ, ໑໙໖໗.

# ຄຳນຳ

ເຣື່ອງທ້າວກຳພ້າຜີ້ນ້ອຍນີ້, ເປັນນິຍາຍພື້ນເດີມອັນເກົ່າແກ່ທີ່ສຸດຂອງລາວ ເຮົາໄດ້ປະເພດນຶ່ງ ຊຶ່ງມີຄຳສອນໃຫ້ຊົນຊາວລາວເຮົາຮູ້ເຖິງຜົນກັມດີກັມຊົ່ວ ທີ່ທຳຂຶ້ນໂດຍເຈຕະນາ ແລະ ບໍ່ເຈຕະນາຊຶ່ງຈະນຳສະນອງຕອບແທນໃນປັຈຈຸບັນທັນດ່ວນ ທັງມີຄວາມສັມພັນຢ່າງແໜ້ນໜຽວ ກ່ຽວກັບວາສນາຊາຕາຊີວິດ, ອັນບໍ່ແນ່ນອນຂອງບຸກຄົນຜູ້ຍາກຈົນ. ອ່ານແລະຟັງເບິ່ງແລ້ວຮູ້ສຶກມີຄວາມອອນຊອນໃຫ້ຄະຕິສັ່ງສອນເປັນຢ່າງດີ ສົມກັບເປັນວັນນະຄະດີລາວບູຮານຂອງເຮົາແຕ່ງຂັ້ນຢ່າງເໝາະສົມ, ຄວນລູກຫລານລາວເຮົາ ແລະ ນັກບຸນທັງຫລາຍ ຖືເອົາເປັນແບບຢ່າງນຳມາປະຕິບັດຕໍ່ໄປໃນອະດີດຕະການດ້ວຍ.

ນິທານເຣື່ອງນີ້ຕົ້ນສະບັບເດີມເປັນໜັງສືຜູກໃບລານ ເປັນຄຳກອນຜູກດຽວຈົບ ເປັນນິທານຊຶ່ງກ່ຽວກັບພຣະພຸທສາສນາ ແລະປາກົດຢູ່ໃນພຣະໄຕປິດົກ ແລະ ພຣະສູດ. ສະນັ້ນ ທາງຫໍສມຸດແຫ່ງຊາດຈຶ່ງໄດ້ນຳຕົ້ນສະບັບເດີມມາຈາກໄທລື້ ໃນນ້ຳເຊືອງແຂວງຫລວງພຣະບາງມາກ່າຍຂຶ້ນແລ້ວ ຊຳຣະຈັດພິມເປັນເຫລັ້ມອອກເຜີຍແຜ່ໃຫ້ຫລາຍໆຄົນໄດ້ອ່ານໄດ້ຟັງ ແລະ ໃຫ້ຊ່ວຍກັນຮັກສາເອົາໄວ້ຈົນເຖິງ ເຍົາວະຊົນຮຸ່ນນ້ອຍ ພາຍຫລັງສືບຕໍ່ໄປ.

ວຽງຈັນ, ວັນທີ [illegible] ຕຸລາ [illegible].

ຫໍສມຸດແຫ່ງຊາດ.

## ພື້ນ ທ້າວ ກ່ຳ ພ້າ ຜີ ນ້ອຍ

ຟັງເຍີ້ ລູງອາປ້າ ສານດີພື້ນປະເສີດ
ເກີດມາ ມີແຕ່ຄຳທຸກໄຮ້ ສເນີຂ້ອຍຄ່າພັນ
ຟັງເຍີ້ ອິດຖີສ້ອຍ ຍິງຊາຍສາວບ່າວ ນັ້ນເຮີຍ
ໃຫ້ຄ່ອຍ ຟັງຈື່ໄວ້ ໄປໝ້າຍ່າໄດ້ລືມ ແຫ້ເນີ
ຟັງເຍີ້ ສາວຮ້າງໝ້າຍ ຜົວໝ່າຍຕາຍປະ້ ນັ້ນເຮີຍ
ຢ່າໄດ້ຕຽມຂວັນຊາຍ ໃຫ້ຊ່າລີຫຼ້າຍບານ
ຂໍໃຫ້ ກຸສົ້ນສາງ ປັນຍາຕິດຕໍ່ ແດ່ທ້ອນ
ຂໍໃຫ້ ຄຸນພໍ່ແມ່ຄ້ຳ ຊູຂົ້ນສູ່ສວັນ
ຂໍໃຫ້ ພົບພຣະແກ້ວ ອງປະເສີດເນດໄຕໂຍ ແດ່ທ້ອນ
ຂໍໃຫ້ ເຖິງອໍຣະຫັນຕາ ຮ່ວມບຸນດອນເຈົ້າ
ອັນທີ່ບຸນຄຸນສ້າງ ສົມພານໂພ້ທິຮາດ ພາຍພຸ້ນ
ສັບພັນຍຸທີ່ແນງ ຈະເຮີນສ້າງກໍ່ສວາງໃຈ
ພີ່ຈັກ ຊຸ້ກວາດພື້ນກ່ຳພ້າ ຜີປ່າຕາມເດີນ ກ່ອນເນີ່

ປາງເມື່ອ ພຣະຫາກທຽວສູ່ງສານ ກ່ອນເຮົາປາງນັ້ນ

ຍັງມີ ເມືອງໃຫຍ່ກວ້າງ ຮຽກຊື່ສາວັດຖີ
ສົມພານສຸກ ໄພ່ໄທ້ຍ້ອງ
ຢູ່ຫ່າງ ກິນທານສ້າງ ປາຣະມີພາຍແຜ່
ບໍ່ຫ່ອນ ມີຄຳເດືອດຮ້ອນ ຮົ່ມເຮົ້າເຢື່ອງໃດ ແທ້ແລ້ວ
ຢູ່ຫ່າງສ້າງ ຮົ້ວໄຮ່ນາສວນ
ຢູ່ຫ່າງໄທຊາວເມືອງ ຄ່ວາຂາຍຄຳແກ້ວ
ຢູ່ຫ່າງສາວບ່າວໜຸ່ມ ວັນຊື່ນກໍ່ມີສຸກ ແທ້ແລ້ວ
ຝູງໝູ່ ສົມທັນພາຍ ກໍ່ຮຸ່ງເຮືອງປານແກ້ວ
ຍັງມີ ສອງຜົວເມັຽເຈົ້າ ຫາກິນລ້ຽງຍ່າ ຄາວນັ້ນ
ສອງກໍ່ຢູ່ສືບສ້າງ ປາງໄຮ່ທຸກຈົ່ມ ແທ້ແລ້ວ
ເຈົ້າກໍ່ເມື້ອຢູ່ບ້ານ ມາລີ້ບ້ານນົ່ງ
ຢູ່ນອກຕາຍ ໄກໃກ້ກໍ່ບໍ່ໄກ
ທຸກຄ່ຳເຊົ້າ ໄປຄ່ວາຂໍທານ
ມາລ້ຽງຍ່າເຖົ້າ ເຂົ້ານັ້ນທຸກວັນ
ເຂົ້ານັ້ນ ກໍ່ລຸລາບໄດ ລູກອ່ອນບຸດຕາ
ເປັນລຳຊາຍ ຮູບງາມປານແຕ້ມ
ສອງກໍ່ ຮັກອິ່ນອ້ອຍ ນ້ອຍໜໍ່ບຸດຕາ
ເພາະເພື່ອ ບຸນບາມີ ຈູບຊົມຖນອມໄວ້
ຊື່ວ່າ ທ້າວກ່ຳພ້າ ນາມມະທີ່ລຳພຣຍ ແທ້ແລ້ວ
ພໍ່ແມ່ຮັກຮູບເຈົ້າ ຈ້າຕ່ານອ່ອນຫວານ

ໂອວ່າ ຕົ້ນດອກງິ້ວ ບານໄຕ່ງາມາລິກາ ນັ້ນມາ
ດອກລິລາບານເປັນຊອນ ກໍ່ຫົນຫອມເຫຼືອລົ້ນ
ໂອ໋ວ່າ ຕົ້ນກາບສອຍ ເປັນຍອຍນ່ຳງາ
ປັດໂທມ໌ ດອກແກ່ແຊວງແຜິງງ່າເຄົ້າ ກາຫຼົງເຈົ້າຈິລັກພີ
ພໍເມື່ອ ດູນານໄດ້ ຫຼາຍປີແຖມຖ່າຍ ມາແລ້ວ
ບາບ່າວຫ້າວ ຈະເຣີ່ມພາໄທຍ໌ມາ
ອາຍຸໄດ້ ສິບປີເປັນຂນາດ
ກໍທາກ ທຸກຍາກແທ້ ເດືອນລ່ຳຖ່າຍຣະດູ
ແຕ່ນັ້ນ ບິດາແກ້ວ ມາດາພໍ່ແມ່
ສອງກໍ່ ຕ້ານຕໍ່ລູກແກ້ນແກ້ວ ແພງລ້ານໃຫ້ຄ່ອຍຟັງ
ລູກຄ່ອຍ ຟັງຄຳເວົ້າ ບິດາສອນສັ່ງ ນັ້ນເນີ
ໃຫ້ລູກຟັງຈື່ໄວ້ ໄປພາໃຫ້ຮ່ຳເພິງ ພໍ່ເນີ
ໂອ໋ວ່າ ບຸດຕາຫຼາ ຂອງແພງພຽມພ່ຳ ກູເຮີຍ
ພໍ່ຈັກຕາຍຈາກເຈົ້າ ຈອນຊອຍຄ່ອຍຢູ່ດີ ພໍ່ທອນ
ຂໍໃຫ້ ສາຍຄໍແກ້ວ ສເນີຕາຕົ້ນພໍ່ ກູເຮີຍ
ລູກຈົ່ງສຸກຢູ່ລ້ອມ ກະທຳສ້າງຖົມຖານ ພໍ່ເນີ
ຢ່າໄດ້ມີໂພຍຕ່ອງ ມານມາບ້ຽນບຽດ ສັງເນີ
ສຸກຂັງ ໃຫ້ລູກສຸກຢູ່ລ້ອມ ທານສ້າງຢ່າໄດ້ລືມ ພໍ່ເນີ
ພຣະກໍ່ ໂສກາກັ້ນ ອິນດູດອນລູກ
ທັງເລົ່າທຸກຍາກກັ້ນ ກະສັນຮອນເທືອໄທ

ເພາະເພື່ອ ວ່າຄິດກ່ວງເຈົ້າ   ແກ້ວເກີດກັບອົກ

ພຣະກໍ່ຫົງຄວາມທຸກ   ຕໍ່ບາຄາມນ້ອຍ

ບາງທີ   ເຈົ້າຊົມບຸນຍູ້   ມີໄຊໂຊກໃຫຍ່   ຈິງມາ

ບາດວ່າ   ບຸນສົ່ງໃຫ   ຍັງຈະໄດ້ລາບລ່ອຍ   ພໍ່ແລ້ວ

ໃຫ້ລູກຈຳສິນໄວ້   ໃນໃຈຢ່າປມາດ   ພໍ່ເນີ

ນັກປາດສ່ອນສັ່ງໄວ້   ໄດ້ຍິນແລ້ວໃຫ້ຈື່ເອົາ   ພໍ່ເນີ

ຄັນວ່າ   ພໍ່ສັ່ງແລ້ວ   ໃຫ້ເຈົ້າຈື່ຄຳສອນ   ພໍ່ເນີ

ຢ່າໄດ້ໄລລືມຫຼົງ   ໃຫ້ຈື່ຈຳເອົາໄວ້

ສ່ອນວ່າກູພໍ່ມໍ້   ວິດັບຊາດປັນຈະຂັ້ນ   ກ່ອນແລ້ວ

ລູກຄ່ອຍເນົາເຄັງ   ຢູ່ດອນມາດາແກ້ວ

ຄ້ອນວ່າ   ພໍ່ສັ່ງແລ້ວ   ກໍ່ເລີຍຖອດປັ້ນຈະຂັນ

ນຳກອງບຸນ   ສູ່ສວັນເມືອງຟ້າ

ບາກໍ່ທຸກຍາກຫຍຸ້ງ   ດອນພໍ່ບິດາ

ອັດຊຸຊົນລະທາໄຫຼ   ເກືອນກະທາຍນຳເຈົ້າ

ຍັງແຕບາບາວທາວ   ລງງຍາແລະມາດາ

ດ່ອນວົງສາ   ຢູ່ສວນນານລ້າ

ອຸບາດຕອງ   ເທົ້າທໍ່ທັງເມືອງ

ແມ່ກໍ່   ເຈັບພຣະກາຍາ   ເວທນາພາວໄຂ

ແມ່ກໍ່   ທົງແສບຣ້ອນ   ບັງເກີດກົລທົນ

ພຍາດເກາມທຳທານ   ຣ່ອນກະທາຍແສນຣ້ອນ

ແມ່ກໍຕ້ານສັ່ງນ້ອຍ  ນາມນະທີ່ພຸດຕ້າ

ແມ່ຈັກ  ມໍຣະນາຕາຍ  ຈາກອອນເມືອຟ້າ

ລູກຄ່ອຍປິດພາກໄມ້ ນໍ້ມ່ວງນາວການ  ແມ່ເນີ້

ເຟືອງໄຟຫຼາຍ  ພາກພູຫຼ່າຍຄ້າງ

ມີທັງຜູ້ຜາງພ້ອມ  ຍຳໄຍພາກສົ້ມໂອ່  ເຮົາເນີ້

ລູກຄ່ອຍ  ປິດຊອກໃຊ້  ມາລ້ຽງຍ່າຕົນ  ແມ່ເນີ້

ຄ່ອຍຢູ່ດີເຍີ້ ກ່ຳພອຍພາ  ສາຍໃຈລູກນ້ອງ  ກູເຮຍ

ໃຫ້ເຈົ້າມີໃຈຂາວ  ຮັກໝູ່ພົມຊາວບານ

ຄ້ອມວ່າ  ເຈົ້າສັ່ງແລວ  ກໍເລີຍຖອດປັ້ນຈະຂັນ

ນຳກຸສົນ  ສູ່ສວັນເມືອງຟ້າ

ແຕ່ນັ້ນ  ບາຄານນ້ອຍ  ສົມລະທາຍອຍຍັ່ງ

ຍິ້ມືທູນແທບເທົ້າ  ສອ້ງເຖົ້າພໍ່ແມ່ຕົນ

ທຸກຄ່ຳເຊົ້າ  ໄທຣຳຫອນທາ

ອັດສຸຊົນລະທາໄຫຼ  ຫຼັ່ງລົງຣຳພ້າ

ທ້າວຈຸ້ມໄທ້  ເຣຣົ້ນຣອງຣ່ຳ

ເພື່ອຄິດເຖິງແຈ່ມເຈົ້າ ສອງເຖົ້າພາກພີ  ແທ້ແລ້ວ

ໂອ້ນໍ້  ແມ່ແກ່ມໄທ້  ຄຸນເກົ່ງພຽງພົ້ມ

ລູກຫາກຍົມມະນານຳ ຣ່ຳຄິ່ງດອນເຈົ້າ

ທຸກວັນນີ້  ໃຜຊິໄປຂໍເຂົ້າ  ແລ່ງງາຍມາສູ່  ກິນເດ່

ພໍ່ແມ່ມໍຣະນົງນ້ຽນ  ໄປແລ່ວກໍສອນກັນ ແລມາ

ບ້ານຫາກເປັນຖິ່ນກວ້າງ ທ້ອຍຣິມແຄມຊີ່ນ
ໄມ້ສັກທັງກໍໂພ ຊຸ່ມເຢັນສະຖານກວ້າງ
ມີທັງ ຕົ້ນໝາກພ້າວ ກໍໄຜ່ໜາມໜາ
ມີທັງ ຜູ້ຜາງກິກ ຍ່ຳໄຍກໍມີພ້ອມ
ໂອ່ພໍ່ແມ່ເຮີຍ ເຈົ້າຫາກຂຶ້ນຊັ້ນຟ້າ ວິມານທອງຫລູງອ່ລ່ຳ ມາເມື່ອ
ລູກຢູ່ພີ້ ຊິທຳສາງສົ້ງຫາ
ພໍ່ເມື່ອ ຫລາຍປີແລ້ວ ຂາຄານຄິດຮ່ຳ
ເຈົ້າກໍພາຍາເຖົ້າ ທ່າໄດແຈກທານ
ຄິດເຖິງບຸຜາແກ້ວ ຍາຣີເຈົ້າແມ່ ກູເດ
ທາວກໍທົງທຸກແຄມ ກະສັນທອດເນທນອງ
ພໍ່ເມື່ອ ອາຍຸເຈົ້າ ເຖິງຮອດຊາວປີ
ກໍເພື່ອບຸນບາມີ ຮູບງາມປານແຕ້ມ
ກໍເພື່ອຈຳສິນໄວ້ ໃນຕົ້ນຫັດທ່ຽງ ຈິງແລ້ວ
ໃຈສລາດຮູ້ ຄອງແກວນອກໃນ
ທ້າວບໍ່ຄ້ານ ການທີ່ປ່ວລະບັດ ແທ້ແລ້ວ
ຄັນວ່າ ການເຮືອນມີ ຄ່ອຍທຳພຽນສ້າງ
ກໍບໍ່ ມີຄ້ຳກາ ທິງສາບັງບຽດ ສັ້ງແລ້ວ
ບາບໍ່ໄປຄ່ວາເອົ້າ ຈາຕານຕໍ່ໃຜ ແທ້ແລ້ວ
ຈິບຂິດບົ້ນ ຕອນຫັ້ງໄວ່ສາກ່ອນ ສາວເອີ້ຍ
ຄັນວ່າ ຄ້ຽວພາກແລ້ວ ເຊີນນ່ອງອານໄປ

ໃຫ້ນ້ອງຟັງແຕ່ແກ້ວ  ສາມລູກໃນທັມ  ນັ້ນເນີ

ອັນວ່າ  ຊາວສະຫາຍບິນບິ້ນ  ຊື່ນຊົມດອນເຈົ້າ

ດອກສີສຽດໄວ້  ຢ່າໄດ້ຮ່ວງຈູມຂາມ  ພີ່ເນີ

ຂໍໃຫ້  ພົມພວງພຣະ  ຫື້ມຫອມນະຄອນກວ້າງ

ທ້າວຄັ່ງແຄ້ນ  ຍິນຍາກແອ້ນຖມັດ  ແທ້ແລ້ວ

ທັງວັນຄືນ  ຢູ່ຕອນໃນຫ້ອງ

ຍັງມີວັນນຶ່ງນັ້ນ ທ້າວກໍຄິດຢາກໄປທ່ຽວຊົມ ດົງໃຫຍ່ຫິມະພານ ທີ່ພຸ້ນ

ກາງໄພສົນ  ທ່ຽວສແວງກາງແຮ້ວ

ທ້າວຈຶ່ງ  ຈາຣະຈາຕ້ານ  ດອນນາຍຄຳມ່ອນ

ເວົ້າຍ່າເຈົ້າ  ຈອນຊ້ອຍແຕ່ມີ

ທ້າວກໍ  ຈາຍາຍເຖົ້າ  ໄອຍະກາເຈົ້າຍ່າ  ຮຽມເອີຍ

ຫຼານກໍ  ຂໍຝ້າຍເສັ້ນ  ດອນເຈົ້າຍ່ານາຍ  ແດ່ທ້ອນ

ຫຼານກໍ  ຄິດໄຄ່ສ້າງ  ແຮ້ວຄ່າຍຄືນຄຳ

ຂໍນາຍແຜງ  ໂຜດຮຽມດຽ້ວນ

ແຕ່ນັ້ນ  ໄອຍະກາຕານ  ດອນຫຼານນ້ອຍອ່ອນ

ຢ່າຫາກ  ທຸກຂະນອດໄຮ້  ໄຫ້ຝ້າຍກໍ່ບີນ  ຍ່າແລ້ວ

ຢ່າຫາກ  ທຸກຫ່ຽງແຫ້  ຈຶ່ງໄດ້ຄວ່າຂໍກິນ

ທັງວັນຄືນ  ຢູ່ຕອນເຕັງກັ້ນ

ເມື່ອນັ້ນ  ທ້າວກ່ຳພ້າ  ໄຫ້ແອ່ວດົນລັ້ງ  ຢູ່ແລ້ວ

ກໍຫາກ  ແຈນໆສຽງ  ໄຫ້ລັ້ງບີ່ນແລ້ວ

ທີ່ນັ້ນ  ໄອຍະກາເຖົ້າ  ພາຫູລັກໄລ່
  ສຽງແຜດຮ້ອງ  ຄຳກາແກ່ທານ
ມີແຕ່  ເຂລັງເສັ້ນ  ພອຍກູຈິ່ຍື່ນ  ນິງແລ້ວ
ອັນວ່າ  ໄພຮ້າຍນັ້ນ  ກູແທ້ມີ
ແຕ່ນັ້ນ  ທ້າວກໍ່ພາ  ຈາຕອບໄອຍະກາ
  ເອົາແຕ່ມາດາເປັນ  ເຍື່ອງໃດດີມາເຈົ້າ
ທີ່ນັ້ນ  ໄອຍະກາເຖົ້າ  ອິດູຕົນນ້ອຍອ່ອນ
  ຫຼານກໍໄຫ້ຈ້ອຍໆ  ທັ້ງມີກໍ່ບໍ່ເຊົາ
  ຍາກໍ່ຄິດຄຽດແຄນ  ຫົກອອກມາປັນ
  ເອົາມິງເຍື່  ຢ່າດົນລ້ງໄທ
  ທ້າວກໍ່ເກັບເອົາໄດ້  ບາຊື່ນຊົນທົວ
ທ້າວກໍ່  ເຮືອພລັນແປງ  ແຕ່ງຄືນຍັງບ່ອງ
ເມື່ອນັ້ນ  ບັນດານຮອນ  ເຖິງອິນຕົນປະເສີດ
  ທີນສີລາບາດໄທ້  ອິນກະດ້າງລອດແຂງ
  ອິນຈຶ່ງເປື້ອງປິ່ນໜ້າ  ຫຼິງລ່ຳຊົມພູ
ກໍ່ຈຶ່ງ  ເຫັນຍາຄານ  ແປງຄືນຍັງເຮ້ືອ
ແຕ່ນັ້ນ  ພຣະຈຶ່ງໂອວາດຕ້ານ  ຈຳທ່ານເທວະບຸດ
  ທ່ານຈຶ່ງລົງເມືອງຄົນ  ໂຜດບາບຸ້ນກວາງ
ທ້າວນັ້ນ  ບໍ່ໃຊ່ໂຍໂສຖ້ານ  ສາມານຊາຊົ່ວ  ສັ້ງແລ້ວ
ທາກແມ່ນ  ພຣະຕົວສ້ອຍ  ອົງລ້ຳຊາດຊິນາ  ແທ້ແລ້ວ

ໃຫ້ທ່ານ ເອົາຍັງແຮ້ວ ບ້ວງບາດຂອງສວັນ ນີ້ເນີ

ໄປສົ່ງໃຫ້ ບາທ້າວຈົ່ງຕ່າວຄືນ

ຄ້ອມວ່າ ອິນກ່າວແລ້ວ ເທວະບຸດຣາຊຍິ້ມ

ໂດຍອິນຕາ ຊອກເອົາຍັງບ້ວງ

ທ້າວໄດ້ແລ້ວ ລົງມາໂດຍດ່ວນ

ຖືບ້ວງບາດມາສົ່ງໃຫ້ ບາທ້າວກໍ່ຕ່າວຄືນ

ເມືອເຖິງຫ້ອງ ວິໄຊຍົນຜາສາດ

ສຸກຢູ່ຜາສາດແກ້ວ ມະຄອນຟ້າຟາກສວັນ ແທ້ແລ້ວ

ບັດນີ້ ຈັກກ່າວເຖິງກຸມານທ້າວ ທຸກຂະຕະເຈົ້າອ່ອນ ກ່ອນແລ້ວ

ເຈົ້າກໍ່ ເນົາເຄຫັງ ຢູ່ດອນນາຍເຖົ້າ

ພໍເມື່ອ ຕາວັນເສົ້າ ເຂົາທ່ອງລັບຫຼຽມ ມາແລ້ວ

ສອງກໍ່ ກິນເຂົ້າພ້ອມ ກັນແລ້ວເລົ່ານອນ

ພໍເມື່ອ ດາຣາຂຶ້ນ ຣຽງພຣະຈັນເຣືອງຣຸ່ງ ມານັ້ນ

ດາວຂ່າງມາຫ້ວານແກ້ວ ດາວເຕັ້ນແອ່ນລົມ

ຟັງດູ ນົກຮ່ຳຮ້ອງ ຂານຄູ່ເວຫາ ພຸ້ມເຍີ

ຟັງດູ ສຽງກຸດໂຕ້ຕົບ ປີກຂັ້ນຈອນແຈງ

ທາວກໍ່ ໄປຫາໄດ້ ມາຄົວຕົກແຕ່ງ

ສອງກໍ່ກິນເຂົ້າ ງາຍແລ້ວແຕ່ງຄົງ

ທ້າວກໍ່ ເອົາມີດແລ້ວ ບ້ວງໃສ່ໃນຖົງ

ລົງເຄຫັງ ອອກໄປມືຊາ

ແລ້ວຈຶ່ງ ຕ້ານສັ່ງເຖົ້າ ໃຫ້ທິນຢູ່ເຄຫັງ ກ່ອນເນີ້

ຫຼານຈັກເດີນໄພຂຽວ ຫຽວສແວງກາງບອງ

ຢ່າສັ່ງນ້ອຍ ເຈົ້າອ່ອນຫຼານຕິນ

ຫຼານຈຶ່ງ ໄປພັ້ນ ໃຫ້ຕ່າວຄືນມາບ້ານ

ຢ່າໄດ້ມີໂພຍຕ້ອງ ອິນຕາຍບັງປຽດ ສັ່ງເນີ້

ຈົ່ງໃຫ້ລຸລ່າບໄດ້ ໂດຍດ້ານດັ່ງຄໍານຶງ ຢ່າຫ້ອມ

ຄ້ອນວ່າ ຢ່າສັ່ງແລ້ວ ເຂົ້າປ່າໄພສິນ

ທ້າວກໍອອຍໆໄປ ເຂດເມືອງໄທທ້າວ

ບາຄານຂ້ານ ພູ່ສູງຫຼາຍລົ້ນ

ເຂົ້າຮ່ອນຫ້ວຍ ຫຼາຍລ້ານລູກດອຍ

ຫຼຶງດູ ເຈັງລິ້ນຫ້ອຍ ປາຍຜ້າສຸດຜີ່ ພຸ້ນເຍີ່

ຄື່ດັ່ງ ຄິນມັດຮ້ອຍ ແປ່ງໄວຮອດງາມ

ຟັງດູ ຖິວລາງຮ້ອງ ໄພສິນຫຼາຍໝູ່

ທັງເຈົ້າທອນດອກໄມ້ ໄພກວ້າງທົ່ວແດນ

ເຫັນໝູ່ຈອງຈັ້ນຄູ ງູເຫຼືອມສັ່ງຮ້າ ມານັ້ນ

ທ້າວບໍ່ຊ້າ ເຫັນແລ້ວລ່ວງໄປ

ເຫັນທັງ ບົວຣະພັ້ນພຸມ ເຂົາຫຼວງລຽນຫ່ອຍ

ເຫັນໝູ່ ສວນດອກໄມ້ ໄພກວ້າງຖຶ່ມພຽງ

ມີທັງ ຍຸງຍາວຮ້ອງ ໃນໄພຫຼາຍໝູ່

ທັງແຮດສູ້ ກະທິງຊ້າງລະມັ່ງເມີຍ

ທ້າວກໍ່ ເລີຍໄປພ້າ ເຫັນມາລາບານແບ່ງ

ຫອມຣ່ວງດວງດອກໄມ້ ບາທ້າວເຣັ່ງໄປ

ວັນດຽວຂາມ ໄປໄກມິ່ງໂຍດ

ເລີຍເລົ່າ ໄປຮອດນ້ຳ ທົງທ້າແມ່ອາມີມ

ທ້າວກໍ່ ກາຍຈາກຫັ້ນ ຂຶ້ນສູ່ຕີນຜາ

ເຫັນບ່ອນພຽງ ຖຶນຈັນແກ້ມຄູ

ເຫັນພູ່ ດອຍຫຼວງຕັ້ງ ເຈັດຫ່ອຍລຽນກັນ

ພູມມະຫາຫອມ ຢູ່ເຕັມສະຖານັ້ນ

ທ້າວຍ່າງຍ້າຍ ລຽບລຳໄປມາ

ກໍຈຶ່ງ ເຫັນທາງຮອມ ຮ່ອມຜາພຽງກ້ວາງ

ທ້າວກໍ່ ແປ້ງຍັງບອງ ຄືນຄຳກາງໃສ່

ແລ້ວຈຶ່ງ ຍ້າຍຈາກຫັ້ນ ຜັນເຕັ້ນລ່ອງໄປ

ບາກໍ່ ເຫັນທາງພ້າ ບາຄານກ່າງໃສ່

ແລ້ວຍ່າງຍ້າຍ ໄປພ້າລຽບດອຍ

ກາງໃສ່ແລ້ວ ກາຍລ່ອງດົງຫຼວງ

ເຫັນທາງມາ ບ່ນານກາງແຮວ

ແລ້ວຍ່າງຂ້າມ ເຫັນທາງກາງໃສ່

ບາບ່ໄວ້ ໃບໄມ້ກວາດລຽນ

ເຫັນທັງ ແຕນຕໍ່ເຜິ້ງ ແປງຮັງດົງໃຫຍ່

ທ້າວກໍ່ ກາງໃສ່ແລ້ວ ບາທ້າວກໍ່ຕ່າວຄືນ

ທາງເຈັດເສັ້ນ  ທ້າວແຕ່ງປຸ້ນເປືອງ
ບໍ່ຣະບອນເລີຍ  ຕ່າວຄືນມາບ້ານ
ວ້ອຍໆຂ້ານ  ດົງຫຼວງຫຼາຍລົ້ນ
ຂ້າມປ່າໄມ້  ໄປພາບໍ່ເຊົາ
ຂ້າມເຂດກວ້າງ  ດົງໃຫຍ່ດອຍຈຸ້ມ
ກາຍເຫວຫຼວງ  ລ່ວງໄປທາງພາ
ຫຼິງດູ  ພາກທາດພົ້ວ  ຝູງໝູ່ມາວການ
ມີທັງ  ວູທຳທານ  ແມ່ນະທີໄຫຼເວັ້ງ
ທ້າວຍ່າງຍ້າຍ  ເຖິງທີ່ແດນເມືອງ
ກາຍດົງຫຼວງ  ລ່ວງມາທາບ້ານ
ພໍ່ດູ  ອາທິດຄ້ອຍ  ເຂົ້າຮອນລົງແລງ  ພຸ້ນເຍີ
ທ້າວຟັ່ງຟ້າວ  ຄືນເຂົ້າສູ່ເຮືອນ
ຍ່າກໍ່ດາດີໄດ້  ພາແລງຮຽງພ່າງ
ສອງກໍ່  ກິນອິ່ມແລ້ວ  ເລີຍເຂົ້າບອນນອນ
ອັນທີ່  ທາງໄກແທ້  ເດີນດົງອິດອ່ອນ  ຍ່າເອີຍ
ຫຼານທາກ ເຫັນຕ່າງແທ້  ໄພກວາງຊູ່ປະການ
ມີທັງ  ຜີໂພງເປົ່າ  ເມົາໄພອະນັນເນກ  ຈິງນາ
ຜີ່ຍາວາຍທັງເສືອສາງ  ຢູ່ດົງອະນັນຕ໌
ມີທັງມາລີຜ້າຍ  ນາງກາຍທ່ອມອອມ
ມີທັງຕົ້ນດອກຊ້ອນ  ຊ້ອນຊູ່ແຄໄພ

ເທັນທັງ ສັດບົວຣະພັນພຸ່ມ ເຂົ້າຫຼວງລ່ຽນໜ່ວຍ
ມີທັງ ສິງແລ່ນເຕັ້ນ ເປັນຖານທີ່ຄຸ້ມ
ສອງຈາຕານ ຫຼາຍປະການແສວຢ່າ
ທ້າວກໍ່ ຫຼັບບໍ່ຟື້ນ ຄິງໄດ້ເພື່ອຝັນ
ຝັນວ່າ ຍັງມີຣາຊສານຊ້າງ ເຈັດງາຊອງອອກ
ຊ້າງກໍ່ມາແຕ່ໃດ ເຖິງເທາຣອດເຣືອນ
ຊ້າງກໍ່ມາຢູ່ຍັ້ງ ນຳບາແທນແທ່
ກໍ່ຫາກ ເຕັນເດີ່ນກວາງ ເທວັນເຕັ້ນຊຸ່ມຊື່ນ
ຝັນວ່າ ຄຸງຄານນ້ຳ ນອງຂ້າວຖ່ວມທຸ່ມ
ກໍ່ຫາກ ລີ້ບລອດບ້ານ ບາທາວທັວແດນ
ຝັນວ່າ ໄດ້ໜ່ວຍແກ້ວ ເຈັດລູກໃສງາມ
ມາຢູ່ໃນເຄົ້ຫັງ ກໍ່ຮຸງເຮືອງທັງຄ່າຍ
ທ້າວກໍ່ ເລີຍກອດຕຸ້ມ ຊິງຈູບມະນີໂຊ
ທ້າວກໍ່ ປຸ່ມຄຳແພງ ບໍ່ວາງຖມອມໄວ້
ພໍ່ປະມູ້ານແລວ ບາຄາມສະດຸ້ງຕື່ນ
ທ້າວກໍ່ ຄິດຄອຍໆ ຄນິງໄອບໍ່ລືມ
ກູກໍ່ ເກີດແຕ່ນ້ອຍ ດອນແມ່ມາດາ
ບໍ່ທ່ອນ ຝັນເຫັນມະນີໂຊ ດັ່ງຝັນຄືນນີ້
ໂອນໍ້ ມັນຈັກເປັນໂທດຮ້າຍ ບໍ່ງເກີດເຕັງຕົນ ນັ້ນລີ
ມັນຈັກ ເປັນສັນໃດ ແກ່ກູປ່າງນີ້

ອັນນຶ່ງ ຣາຊສານຊ້າງ ເຈັດງາຊອງອອກ ມານັ້ນ

ອັນນຶ່ງ ນ້ຳຫຸ່ມຖ້ວມ ເຮືອນຢ້າວລ່ອງໄຫຼ

ທ້າວກໍ່ ຄິດບໍ່ຖອງ ທິ້ມແຫ່ງຄຳຝັນ

ທ້າວກໍ່ ໄຂປັນຍາ ເວທມາຂຶ້ນແລ້ວ

ບັດນີ້ ຈັກກ່າວເຖິງແຮ້ວ ຂ້ວງບາດໄພສົນ ກ່ອນແລ້ວ

ຂາຄາມກາງ ຮ່ອນຜາວານນັ້ນ

ຍັງມີ ຜີປ່ານ້ອຍ ເດີນແອ່ວຫາກິນ

ມັນກໍ່ ທະຍານຕີນຜົນ ປ່າໄພພະນັ້ງກວາງ

ມັນກໍ່ ນອນໃນຖ້ຳ ຄູຫາຖ້ຳໃຫຍ່

ອັນແຕ່ ຜີຢູ່ໃນເຂດນັ້ນ ກໍ່ຂາມຢ້ານແຜ່ມັນ

ມັນກໍ່ຫຼອໄປຫຼົ້ນ ດອນພຍາຄຸດໃຫຍ່ ພາຍພຸ່ມ

ອັນວ່າ ຝູງພີ່ນ້ອງ ພົງເຊື້ອກໍ່ບໍ່ມີ

ພໍ່ເນື່ອ ຕາວັນເວັ້ນ ວາງພະໂຍມລົງຕ່ຳ

ມັນກໍ່ ກັບຕ່າວປິ້ນ ຫາຖ້ຳເນົ້ານອນ

ວັນນັ້ນ ມັນຜົນເຕັ້ນ ໄປດອນສິໂນຣາດ

ມັນກໍ່ ເທາະເນື່ອຍຫຼິ້ນ ແລງແລ້ວຕ່າວມາ

ເຖິງຄ່ຳຄ້ອຍ ມັນແອ່ວຫາກິນ

ມັນກໍ່ ໄປຕາມທາງ ລຽບຕີນພະລານກວ້າງ

ເລີຍລວດມາຖືກແຮ້ວ ຂ້ວງບາດຂາຄາມ

ມັນກໍ່ ຮຸນແຮງດິ້ງ ຖີບທຳທັງຮ້ອງ

ມັນກໍ່ ແກວໆຮ້ອງ ເທຫວັ້ງກິ່ງເກື່ອນ
ແຮ້ວແລ້ະຂວ້ງຂາດຄ້ອງ ພັ້ມໄວ່ຂໍ່ມາຍ
ມັນກໍ່ ຮຸ້ມແຮງດົມ ໄປມາຂໍ່ມີປ່ອຍ
ມັນຫາກ ພິດແຮງແລ້ວ ທິ້ງໄທຢູ່ດາຍ
ບັດນີ້ ຈັກກ່າວເຖິງເຈົ້າ ພຍາເທັ້ງນຕິອປະເສີດ ກ່ອນແລ້ວ
ມັນກໍ່ ເດີນໄຕ່ເຕົ້າ ໄພກວ້າງທ໋ອດອຍ
ມັນແຕ່ ຂໍ່ຮິວ້ານທາວ ພຍາເຫວັນເຈັດໝື່ນ
ຊິມຢູ່ສ້າງ ຖິງກ້ວາງພ່ຳນານ
ມີທັງໝື່ສ້ຮອຍ ເໝີອຍໄທ່ສາມພັນ
ຊິມດອຍຫຼວງ ໝູ່ພົງຄະນາເນື້ອ
ເດືອນໃດ ຫງັ້ວມາຫຼຸມ ໃນຖົມຂອມພງວ
ຫມື່ນະ ມີໄມ້ມະມີໂຄດ ລຳດົ່ອມາກຫຼາຍ
ມັນກໍ່ ພາໝູ່ຜ້າຍ ດອຍຫຼວງມາຮອດ
ມັນກໍ່ ເດີນໄຕ່ເຕົ້າ ທາງເຂົ້າຮ່ອມດອຍ
ກໍ່ຈົງ ມາຖຶກແຮ້ວ ຄືນແຫ່ງບາຄານ
ມັນກໍ່ ແກວໆສຽງ ສັ່ນສາຍທັ້ງຮອງ
ມັນກໍ່ ພິດຖຶບແລ້ວ ຢືນຢູ່ເຕເຊ
ຕາມັນແດງ ເວຫມາຍິ້ນຍອຍ
ທັງເລົ້າ ຄິດຮອດທອງ ຫາໝູ່ພົງຄະນາ
ເຫັນທີ່ ກູຈັກມໍ່ຣະນາຕາຍ" ກໍ່ຂີ້ໃຜຮູ້

ພຍາເຫງັ້ນຮອງ ທາເມັງຫົວພູ່
ກູຈັກ ຕາຍບາດນີ້ ບໍ່ມີມນບາບເວນ ແລນາ
ບັດນີ້ ຈັກກ່າວເຖິງພຣະບາດເຈົ້າ ອົງເອກພຍາກວາງ ກ່ອນແລ້ວ
ມັນກໍ່ ພາໝູ່ຍ້າຍ ໄພກວ້າງຊອກກິນ
ໝູ່ມົ່ງຍ້າຍ ໄປທ່ຽງມາໄລ
ໝູ່ມົ່ງໄປລົງໜອງ ແຮດຕົວຣິດທີ້ກາ
ໝູ່ມົ່ງມານຳເຈົ້າ ໄພຂວາງທິ່ນະເວດ
ທ້າວກໍ່ ພາໝູ່ຜ້າຍ ເດີນດົ້ນລ່ອງມາ
ມິທ້ົງແຮດແລະສູ ເຂົ້າເຫພຍ່າກວ້າງ
ລັດລ່ອງເດີນມາເຖິງ ຮ່ອນດອຍກິນຫຽ້າ
ໝູ່ກໍ່ຊ້າຢູ່ໃຕ ພຍາລ່ອງມາໄວ
ເຖິງຕີນດອຍ ລ່ອງທາງເດີນດົ້ນ
ເລີຍເລົ້ານາຄິກບ້ວງ ໄຍແຫ່ງບາຄານ
ກວາງກໍ່ເລີຍຕົ້ນເຕັ້ນ ຮຸນແຮງແລວຢູ່ເຫົ້າ
ມັນກໍ່ ເປກໆຮອງ ເຕັ້ນດີດເຄົ້ງໆ
ໃນໄພສົ້ນ ກໍ່ບໍ່ມີໜໄດ
ຕາເຫຼືອກທັງແເມບລົ້ນ ດັ້ນດົ້ນເທທວງ ຢູ່ແລ້ວ
ກໍທີ່ ຄນິງສາຍ້າ ໝູ່ພົງພາຍພຸ່ມ
ບັດນີ້ ຈັກກ່າວເຖິງຣາຊາເຈົ້າ ພຍາໃທຍຜຽກໂຄ ກ່ອນແລ້ວ
ພຣະກໍ່ ນິເຕໂຊ ເດດດີຣດທີ້ກາ

ມັນແຕ່ ໃນຫີນຫ້ອງ ຫິມະພານກໍລືເດດ ມັນແລ້ວ
ໃຜບໍ່ມີຜາບແພ້ ກໍຍອມຢ້ານແກ່ມັນ
ມັນກໍໄປຜາບໄດ້ ເອົາສິງເປັນເພື່ອນ ມັນແລ້ວ
ສິງກໍໄປພ່ຳພ້ອມ ພຍາເຈົ້າຜຽກໂຄ
ແລ້ວຈິ່ງ ທຽວມັກຄ້າເຂົາ ຫົນທາງລຽບຮ່ອມ ມານັ້ນ
ກໍຈິ່ງ ມາຖືກແຮ້ວ ຄາບ້ວງແຫ່ງຢ່າ
ສິງດີ້ນເຕັ້ນ ໜີຈາກພຍາເສືອ
ລາງພ່ອງ ເມືອທາງເຫິງ ແລ່ນໄປທາງໃຕ
ມັນກໍ ຊີງມີ້ງໜາ ຕາແດງໂດຍເລືອດ
ສຽງປີ້ບຮ້ອງ ດັ້ງກອງທົ່ວໄພ
ອັນນີ້ ວິບາກຕ້ອງ ເວັ້ນແຕ່ພາຍຫຼັງ ແລນໍ
ມັນກໍ ພົ້ນທະນັງມັດ ຜູກດີຣັງໝັ້ນ
ກູກໍໜີບໍ່ໄດ້ ຄ່ອງແຕ່ຄຳຕາຍ ແລນໍ
ກູບໍ່ມີໜີໄປ ເຂດແດນໃດໄດ້
ຄິດເຖິງຣາຊສິງແກ້ວ ຫົງທອງຊົພາກໜູ ກັນແລ້ວ
ກູກໍ ລືເດດກ້າ ຊິຕາຍຄ້າງຜູ້ດຽວ ແລນໍ
ບັດນີ້ ຈັກກ່າວເຖິງພຍາຊ້າງນ້ຳ ເດີນແອ່ວຫາກິນ ກ່ອນແລ້ວ
ມັນກໍ ເດີນໄພສົນ ທ່ຽວຫາກິນຫຍ້າ
ກໍຈິ່ງ ທຽວທາງເຂົາ ຫິມະພານກໍພໍ່ຫ້ອງ ທາງແລ້ວ
ອັນແຕ່ ໃຕ້ທາງສມຸດໃຫຍ່ກວ້າງ ພຍາເຈົ້າຜາບຜູ້ດຽວ

| | | |
|---|---|---|
| ມັນແຕ່ | ທ້າແມ່ນ້ຳ | ກໍຍອມອ່ອນຫາກູ້ ແພ້ແລ້ວ |
| ມັນແຕ່ | ໃນເມືອງຜີ | ກໍພາຍໄປໂດຍໄດ |
| | ມັນກໍຫາກິນຫຽ້າ | ພາໝູ່ເດີນມາ |
| | ບໍຣິວານຫຼາຍ | ຝ່າຍວັງມະທີນ້ຳ |
| ກໍຈິງ | ມາເຖິງເທົ້າ | ຕີນຜາລານໃຫຍ່ |
| | ກາຍທີ່ຜາໜ່ອຍແກ້ວ | ມາພົ້ລ່ອງທາງ |
| | ເສນາພ້ອມ | ພໍພັນດັ້ນດຸ່ງ |
| | ທາງລ່ອງເທົ້າ | ພະລານນັ້ນທີ່ຮອມ |
| | ໝູ່ຜຽກອ້ອມ | ໄປຝ່າຍທາງຂວາ |
| ພຍາກໍ | ໄປຕາມທາງ | ກໍລອດເລີຍຄາຂ້ອງ |
| | ມັນກໍໄປບໍ່ໄດ້ | ເຈັບປວດທັງຕົນ |
| ພຍາກໍ | ເຊັນໆເຈັບ | ປວດໃນຕາມໄສ້ |
| ໂອນໍ່ | ກູຈັກມຸດມອດມ້ຽນ | ຕາຍປ່ຽວບໍ່ເຫັນເມັຽ ແລ່ນ |
| ກູຈັກ | ໄລວົງສ້າ | ໝູ່ພິງຄະນາເນື້ອ |
| ມັນກໍ | ເທຫ້ອງໄຫ | ສົນລະວົນຫິວຫອດ ຈິງແລ້ວ |
| | ສຸດທີ່ມັ້ນດິດເຕັ້ນ | ຫິວໄຫ້ຢູ່ເລິງ |
| ໝູ່ກໍ່ | ພາກັ້ນໄຫ | ນຳພຍາແລ້ວສັ່ງ |
| ໝູ່ກໍ່ | ຍ້າຍຈາກເຈົ້າ | ຄືນເຂົ້າສູ່ມະທີ |
| ບັດນີ້ | ຈັກກ່າວເຖິງພຍາຮຸ້ງ | ຕົນອາດເຕໂຊ ກ່ອນແລ້ວ |
| ເຈົ້າກໍ | ເດີນທາງມາ | ກໍລອດເລີຍຄາຂ້ອງ |

ເຈົ້າກໍ່ ເຣືອງຣິດທີເຫຼື້ອມ ເຕັ້ມແຜ່ນທໍຣະນີ
ເຈົ້າບໍ່ ອາດພາຕົນພົ້ນ ຫຼີກໄປທີ່ໃດໄດ

ໂອ້ ກູຈັກມຸດມອດມ້ວຍ ຕາຍຢູ່ຖິ່ນດຽວ ແລ່ມ
ຄິດເຖິງວັງຄະນາໝອງ ບໍ່ອາດປອງໄປໄດ້

ກູກໍ່ ຫາກເຄີຍມາທ້ຽມ ຕົນຜູ້ກໍ່ຫຼາຍເທື່ອ ມາແລ້ວ
ກໍ່ບໍ່ເປັນເຊັ່ນນີ້ ຫົວໄຫ້ເວຫນາ

ບັດນີ້ ຈັກກ່າວເຖິງຣາຊາທ້າວ ພຍາຫຼວງຊ້າງເຜືອກ ກ່ອນແລ້ວ
ພຣະກໍ່ ທະຍານໄຕ່ເຕົ້າ ດອຍກວ້າງລ່ອງມາ
ກໍ່ມາ ເຖິງທີ່ຕີນດອກແກ້ວ ຝັ່ງໝູ່ມາຣີ
ກໍ່ຫາກ ບານຈູມຈີ ຫອດຖ້ວງດອນໄມ້
ມີທັງ ດອກຊ້ອນປ້ອນ ແກມໝູ່ເບັ່ງຊູ້ນ
ມີທັງ ພົມມະຫາຫອມ ດອກລີລາຟອນ
ມີທັງ ພິເພດຣ້າຍ ຫາວກໍ່ລ່ອງກາຍມາ
ບໍຣິວານບາ ສີ່ແສນຕົວກ້າ
ທ້າວກໍ່ ທຽວມັກຄາເຂົ້າ ມາເຖິງດອຍເຂົ້າໄຫ່
ທ້າວກໍ່ ຊຸດຍ່າງຍ້າຍ ກ້າຍຫັ້ນຮ່ອນເຊົ້າ
ກໍ່ຈອງ ມາຖືກຕ້ອງ ບ້ວງບາດບາຄາມ
ແຮ້ວກໍ່ ພັນທະນັງຮັດ ຜູກຄໍຄ້າໄວ້
ແຕ່ນັ້ນ ທັດຖີເຕັ້ນ ຮຸນແຮງອິດອ່ອນ
ເຈົ້າກໍ່ ເຈັບປວດເນື້ອ ຫົວໄຫ້ຢູ່ດາຍ

ພຣະກໍ ຊົດໆນ້ຳ ຊົລເນດນອງຕົກ ຢູ່ແລ້ວ
ທ້າວກໍ້ ເທຫວງທຸກ ເວໜານານມື້
ຝູ່ງໝູ ພິງຄະນາຊາງ ເຂົາເຫັນພຍາໃຫຍ່
ໝູ່ກໍ ມາຢູ່ເຝົ້າ ບ່າທ້າວສັ່ງໄປ
ບັດນີ້ ຈັກກ່າວອ້າຍກຳພ້າ ຍັ້ງຢູ່ສາມວັນ ກ່ອນແລ້ວ
ມັນຈຶ່ງຈາມາດາ ຣຽກຫານາຍເຖົ້າ
ລູກຈັກ ເດີນໄພກ້ວາງ ຊອກຫ່ອງທາຄືນ ກ່ອນແລ້ວ
ຍ່າຈຶ່ງເມີາເຄຫັງ ຢູ່ດີຢ່ານີ້ຣອນ
ຄ້ອນວ່າ ເຈົ້າສັ່ງແລ້ວ ເຂົ້າປ່າໄພສົນ
ທ້າວກໍ ເດີນມັກຄາ ຫ່ອງໄປຍາມເຊົ້າ
ວອຍໆຂ້ານ ໄພສົນຫຼາຍຍ່ານ
ເຈົ້າກໍຂ້ານປ່າໄມ້ ຫຼາຍລານລູກດອຍ
ເຈົ້າກໍ ຂ້ານເຂົ້າເຖິງຣອດ ໄມ້ໃຫຍ່ຊົ່ນພູ ທີ່ພຸ້ມ
ກາຍທີ່ເຫວໃຫຍ່ຫົ້ນ ເຫັ້ນຕົ້ນດອກຍົວ
ຫິວເຫັນໄມ້ ລຳສູງແສນວ່າ
ກໍຫາກ ສຸກມາກແທ້ ເຫຼືອລົ້ນທ່ອໄພ
ຍາໄທທ້າວ ເດີນດອງດັ້ນດຸ່ງ
ເຫັນໝູ່ຝູງຣອກຈ້ອນ ຄະນາເນື້ອທ່ອໄພ
ວອຍໆຂ້ານ ໄພສົນທິມະເວດ
ແດດເຣັ່ງຣ້ອນ ບ່າທ້າວເຣັ່ງໄປ

ແລ້ວຈິ່ງ ລົງອາບນ້ຳ ແມ່ໃຫຍ່ອະໂນມາ
ບາຄານເຫັນ ຕ່າງຕາຜີຣາຍ
ແລ້ວລ່ວງຂຶ້ນ ເຖິງທີ່ບອນພຽງ
ພໍເຫັນ ຫີນະພານຫຼວງ ໂຍດໄກເຫຼືອລົ້ນ
ທ້າວກໍ່ ຫຼິງລ່ຳຢຽມ ລຽບທີ່ຕີນດອຍ
ບາຈິ່ງເຫັນຍັງຜີ ຖືກຄືນຄາບ້ວງ
ຜີກໍ່ຍື່ນມືໄຫວ ຂໍ່ດອນເຈົ້າພໍ່ ອອນທ້ອນ
ຊ້າຂໍ່ ດອນບາດພົ້ນ ຈອນເຈົ້າຂີ່ໄລ
ນ້ອງຂໍ່ ໄປດອນເຈົ້າ ພູ່ທອນລົງເຍື່ອນໂຜດ ເອົ້າທ້ອນ
ອັ່ນແຕ່ ຕົວຊ້ານ້ອຍ ຂໍໄວ້ນອບພຣະອົງ
ທ້າວກໍ່ ອື ໆ ຕາມ ດ່ອນຜີຄຳນ່ອນ
ບາບ່າວທ້າວ ກໍ່ເລີຍແກບາດໄຍ
ທ້າວກໍ່ ມາຍບາດບ້ວງ ອອກຈາກຄໍຜີ
ເອົາໄຍຄືນ ໃສ່ຖົງເລັ້ຍມຽມ
ແລ້ວຈິ່ງ ບາຍເອົານ້ຳ ຍື່ນໃຫ້ຜີກິນ
ອັ່ນວ່າ ດວງສັດຈະສົມ ທານຢ່ານີ້ຄຳລຽວ
ຜີກໍ່ ບາຍເອົານ້ຳ ນຳບາກີນອິ່ມ
ນ້ອຍນິ້ງໄດ ແຮງແລ້ວຄ່ອຍຈາ
ແຕ່ນັ້ນ ທ້າວຈິ່ງຖາມຫາແກວ ວົງສາເຊື້ອຊາດ ມັນນັ້ນ
ກັບທັງ ພໍ່ແມ່ແກວ ແນວເຊື້ອລູກເມັ້ງ

ຜີປ່ານ້ອຍ ຂານອ່ອນຂາຄານ

ອັນວ່າ ສາຍາອ່ອນ ບຶ້ນມາເຈົ້າ

ແມ່ນວ່າ ບິດາໄທ້ ມາດາກໍພີຈາກ ອອນແລ້ວ

ພຣະຫາກ ລຶດຊູ້ອົມງົມ ເມືອຟ້າແຕ່ມານ. .ແທ້ແລ້ວ

ທ້າວກໍ່ ຍິນດີຕາມ ດອມຜີອາດປະກອບ

ຄັນວ່າມີດັ່ງເວົ້າ ໄປທ້ອນພີ່ຂົມ ເຈົ້າເອີຍ

ຄ້ອນວ່າ ຈາກັນແລ້ວ ພ່າຍຖືງດົ້ນຖຸ່ງ

ເຂົ້າປ່າໄມ້ ໄປພ້າຮ່ອນທາງ

ເຫັນໝູ່ງູສັດຮ້າຍ ທັງຜີກ່ອງກ່ອຍ

ທ້າວກໍ່ ຈາຕົ່ນອງ. ຄຳແຈ້ງຊູ່ປະການ

ຮອດປ່າກ້ວຍ ລັດໃສ່ຕີນຜາ

ຕາບາຊອນ ລຽບນຳຕີນຖ້ຳ

ກໍ່ຈຶ່ງ ເຫັນພຍາເທວັນເຈົ້າ ຄາຄືນແຮ້ວຢູ່

ທ້າວຈຶ່ງ ຕ້ານຕົ່ນ້ອງ ແພງລ້ານແທ່ງຕີນ

ບັດນີ້ ເຮົາຈັກເອົາເທວັນເຖົ້າ ໄປແກ້ງກອຍລາບ ກິນແລ້ວ

ສອງພີ່ນ້ອງ ເຮົາຟ້າວຮີບໄວ

ແຕ່ນັ້ນ ເທວັນຈຶ່ງມຸບນອບນົ້ວ ຂໍໃຫ້ໂຜດປານີ ແດ່ທ້ອນ

ຂໍພຣະກູນາພາຍ ໂຜດລຸງປາງນີ້

ແມ່ນວ່າ ຄຸນໂມເຈົ້າ ບໍ່ມີລົມເທົ່າຊົວ ຫຼານເອີຍ

ການເຈົ້າມົ້ພົ້ມຊັ້ນ ລຸງຂໍເກືອກອນຕາງ ເຈົ້າເອີຍ

ທ້າວຈິ່ງ ຊັ້ບອກໃຫ້ ຜີປ່ອຍວາງເຫວັນ
ນ້ອງຈົ່ງ. ມາຍເອົ້າຄືນ ຈາກຄໍ່ພຍາເຈົ້າ
ຜີຈິ່ງແກ້ ປະປ່ອຍວາງໄປ
ຕາມພາສາ ແທ່ງມັນຈິງແທ້
ເຫວັນຈິ່ງໄຂວາດຂີ້ ຕ້າມສັ່ງບາຄາມ
ຖ້າຫາກມີຄໍາຊັ້ດ ຮ່ໍາຄິ່ງຫາຂ້ອຍ
ຄັນວ່າ ການເມືອງຮ້ອນ ເຕັງອົງພຸອະມາດ ເມື່ອໃດ
ຂໍ້ໃຫ້ ຄິດຮອດຂ້າ ຈະເມືອຄໍ້າຊ່ວຍຊູ
ຄ້ອນວ່າ ເຫວັນສັ່ງແລ້ວ ທ້າວເລົ່າຍິ້ມ
ລາພຍາເຫວັນ ດຸ່ງເດີນໄປໜ້າ
ທ້າວກໍ່ ໄປເຖິງຕົ້ນ ຈັນທອນໃນຖິ່ນ
ມີໝູ່ ແຮດແລະສູ້ ກະທິງຊ້າງລະມັງເມີຍ
ກໍຈິ່ງ ເລີຍໄປໜ້າ ເຫັນມາຣິບານແບ່ງ
ເຫັນທັ່ງເໝັ້ງຜູ້ເຜິ້ງ ຊົມກວ໊ກນລະອອງ
ທ້າວຈິ່ງ ຊອນທີງຢ່ງມ ໃນໄພທຸກແທ່ງ
ກໍຈິ່ງ ເຫັນເຕົ້າເໝັ້ນ ພີເອັ້ນທີ່ກໄກ
ກໍຈິ່ງ ເຫັນກວາງເຖົ້າ ຄາໄຍບວງບາດ
ທ້າວກໍ່ ຈາຕົ່ນ້ອງ ໄຂເອົາວາດກິນ
ບັດນີ້ ເຮົາຈັກເອົາກວາງເຖົ້າ ໄປແກງກ້ອຍລາບ ກິນເຫັນ
ເຮົາຢ່າຊ້າ ດ່ວນຮີບໄວ

ແຕ່ນັ້ນ ພຍາກວາງຕານ ຂໍພອນອະນຸຍາດ ອວນທ້ອນ
ຄຸມເຈົ້າໝື່ນຕື້ ຕົວຂ້າບໍ່ລືມ ແທ້ແລ້ວ
ຂໍແກ່ ບຸນຄຸນເຈົ້າ ຈົ່ງປານີຜາຍໂຜດ ເອົ່າທ້ອນ
ຂໍໃຫ້ ປ່ອຍຂ້ານ້ອຍ ປາງນີ້ເທື່ອດຽວ ແດ່ທ້ອນ
ແຕ່ນັ້ນ ທ້າວກໍອ້າງກວາງແລ້ວ ມາຍຄືນແລວປ່ອຍ
ກວາງກໍເອົາສັ່ງເຈົ້າ ຄຳລະທ້ອຍຊູ່ອັນ
ຄັນວ່າ ອິ່ນຕາຍຕ້ອງ ເຖິງອົງພູອະນາດ ເນື່ອໃດ
ຂໍໃຫ້ ຄິດຮອດຂ້ອຍ ພາຍພ້ຳຊ່ວຍຊູ
ທ້າວກໍ ອືໆຕ້ານ ຂານລຸງຄຳມວນ
ລຸງຢ່າໄດ້ລືມສັດ ຈື່ດຈຳໝັ້ນ
ຄ້ອນວ່າ ທ້າວສັ່ງແລ້ວ ເຂົ້າປ່າໄພສົນ
ພາກັນເດີນມັກຄາ ລ່ວງໄປທາງໜ້າ
ທ້າວກໍ ເຫັນໝາກໄມ້ ສອງເລົ່າເອົາກິນ
ແລ້ວຈຶ່ງ ພາກັນກາຍ ປ່າໄພໄປໜ້າ
ຍ່ອງໆຍ້າຍ ດົງໃຫຍ່ໄພສົນ
ຫຼິງເຫັນ ພິງຄະນາສັດ ແຂກເຂົ້າຂັ້ນຮອງ
ທ້າວຍ່າງຍ້າຍ ກາຍເຂດພູຈັນ
ແສນພະນັງຕັນ ໝື່ນຖັນໄປໜ້າ
ກໍຈຶ່ງ ແລເຫັນເຈົ້າ ພຍາໃຫຍ່ຜູ້ກໂຄ
ຊົງມົງຕາ ແຂ້ວຍາວຕົວພຸຍ

ມັນເລົ່າ ຊົງມົງໜ້າ ຕາແດງໂດຍເລືອດ
ມັນກໍ ທ້ຳລິດກາ ສຽງຮ້ອງຄຶ້ມເຄັງ
ທ້າວໜຸ່ມຢ້ານ ຢຸດຢູ່ແອນໄກ
ເສືອກໍ ເຫັນຂາຄານ ວ່າໂດຍຢ່າຊ້າ
ປູ່ບໍ່ລືມຄຸນເຈົ້າ ເພື່ອທົ່ວລົ້ນເກດ ຈິ່ງແລ້ວ
ປູ່ຈັກຄິດຊ່ວຍເຈົ້າ ຜອງເທົ້າຊົວຊີວັງ
ທ່ານຈົງມາຍຄືນແຮ້ວ ທັງໄຍຂ້ວງຂາດ ຮຽນທອນ
ປູ່ກໍເຈັບປວດຮ້າຍ ຂໍເຈົ້າຢ່າໄລ ປູ່ຫອນ
ທ້າວຈິ່ງ ບອກໃຫ້ຜີປ່ານອຍ ແກ້ປ່ອຍອ້າງເສືອ
ຂາຄານປະ ປ່ອຍໄປບໍ່ມີຊ້າ
ເມື່ອນັ້ນ ຮາຊາເຈົ້າ ພຍາເສືອຕ່ານສັ່ງ
ຂໍໃຫ້ ທ່ານຢູ່ໝັ້ນ ພົ້ນຕີ່ຢ່າໄລ ປູ່ເນີ່
ຄັ່ນວ່າ ອຸບາດຕອງ ບັງເກີດກົນລະຫຸ້ນ ເມື່ອໃດ
ຂໍໃຫ້ ຮຳພຶງຄິດ ອ່າວຄິງເຖິງຂາ
ທ້າວກໍ ອື ໆ ຕ້ານ ຮັບພ່າກຄຳເສືອ
ປູ່ຈົ່ງມີຄວາມສຸກ ຢ່າມີໄພຕອງ
ໃຫ້ປູ່ຈຳສັດໝັ້ນ ສັດຈິງທຸກສິ່ງ ດີເນີ
ປູ່ຢ່າຄົບໄພ້ນອຍ ພົ້ນຕີ່ຄອຍຢູ່ດີ ແດເນີ
ປູ່ກໍອື ໆ ຕ້ານ ຟັງຄຳທ່ານສັ່ງ
ທ້າວຍ່າງຍ້າຍ ໄປໜ້າບໍ່ເຊົ່າ

ຄາວນັ້ນ ທ້າວຍ່າງຍ້າຍ ກາຍເຂດເຫວຊັ້ນ
ແສນພະນົມຕົ້ນ ພື້ນຖົ້ນໄປພາ
ດີແກ່ ຊີ້ນເຊີຍໄມ້ ສີກົ້ນຄີເສບ
ຄີດັ່ງ ສຽງພາດຄອງ ແຄນໄຄຊູ້ຍລະບຳ
ຫູງເຫັນ ຊວາ ໆ ນ້ຳ ຕົກຕາດຕີ່ນຜາ ພຸ້ມເຍີ່
ຟອງຂົ້ນ ສອງງາມເງົາແກ່ວ
ທ້າວກໍ ຊອມຕາຍ້ຽມ ເຫັນໄປເມືອຕ່າງ
ທ້າວກໍ ເຫັນຊ້າງນ້ຳ ຄ້າບວງຍາດຄີມ
ເຣົາຄອຍເອົາຊ້າງນ້ຳ ໄປແກ່ງກ້ອຍລາຍ ກິນເຫັ້ນ
ເຣົາຢ່າຊ້າ ດຽວນີ້ຣີບໄວ
ແຕ່ນັ້ນ ຣາຊສານຊ້າງ ຂໍວອນບາບ່າວ
ຂໍພຣະຜາຍໂຜດຂາ ປາງນີ້ຢ່າກະທຳ ແດ່ທ້ອນ
ອັນວ່າ ຄຸນຂອງເຈົ້າ ບໍ່ມີລືມເທົ່າຊົ່ວ ຫຼານເຣີຍ
ອາວຂໍຄິດຊ່ວຍເຈົ້າ ຜອງເທົ່າຊົ່ວຊີວັງ
ອາວຂໍດວງຊີວັງໄວ້ ຈົ່ງປານີຜາຍໂຜດ , ເອົາທ້ອນ
ການເຈົ້ານີ້ໝື່ນຊັ້ນ ຂ້າຂໍຄ້ຳຂໍ່ວາງ
ທ້າວກໍ ວາງພຍາຊ້າງນ້ຳ ພາຍສານແກ່ປ່ອຍ
ມ້າຍບາດບ່ວງ ຄີນເຂົ້າໃສ່ຖົງ
ຊ້າງກໍ່ນ້ຳໆຕາມ ຫຼາຍປະການເມືອສັ່ງ
ບາບ່າວທ້າວ ຂານຂໍ້ຊູອັນ

ຄ້ອນວ່າ　ຊ້າງສັ່ງແລ້ວ　ທ້າວດຸ່ງເດີນໄປ.

ຄ້ອນໆກາຍ　ດ່ານແດນເຂົາຂັ້ນ

ຟັງຍິນສຽງສັດຮ້ອງ　ນັນເນືອງຊຸ່ມຊື່ນ　ພຸ້ມເຍື່.

ສັບພະດວງດອກໄມ້　ບານບາງແຄໄພ

ມີທັງ　ລີລາພ້ອມ　ຣົດຣ່ວງເກສອນ

ຢູ່ທ່າງ　ພຸມມະລາຊູ້ນ　ດອກດວງໃນການ

ຍາຄານທາວ　ທວາຍຊູມດວງດອກ

ທອນກິ່ນກ໋ວ　ລະອອງຟຸ້ງທົ່ວໄພ

ທັ້ນ　ກິ່ນຕົ້ນດອກໄມ້　ດວງດອກມາລີ

ຕະນົມພົມສົມ　ດັ່ງນາງສວັນຟ້າ

ຕາຄົມຄ້ອຍ　ແອວງົ້ມຄວກ່ອງ

ຄິ້ງຣາຍສວຍ　ນົມຕັ້ງຕຸ່ມງາມ

ຫູງດູໝ້າ　ກິ່ນມະລິສເນີ່ພາກ　ກັ້ນແລ້ວ

ເຕົ່າຕໍ່ຂວັ້ນ　ແຂວນໄວ້ຢູ່ຈະລອນ

ກາຍຈາກທັ້ນ　ລ້ຳລ່ອງຫູງແລ

ກໍ່ຈຶ່ງ　ເຫັນຍັງຮູ້ງ　ຢູ່ເຫິງາຄົ້ນນັ້ນ

ກໍ່ຈຶ່ງ　ໄປເຖິງເຈົ້າ　ພຍາຫຼວງຮຸ່ງໃຫຍ່

ເຈົ້າກໍ່　ຖືກບາດບ້ອງ　ຄາທັ້ນຢູ່ເຫິງາ

ແຕ່ນັ້ນ　ພຍາບາດເຈົ້າ　ຮຸ່ງຫຼວງຕົວໃຫຍ່

ຂ້ອຍທາກ　ມາຖືກບ້ອງ　ຄ້າແຮ້ວແຫ່ງບາ　ແທ້ແລ້ວ

ບັດນີ້ ຂໍແກ່ຈອມຫົວເຈົ້າ ຈົ່ງກູ້ມາຜາຍໂຜດ ເຊົາທ້ອນ
ຂໍໃຫ້ ລົງປູ່ໄວ້ ພາຍພາຫາກຈະເຫັນ
ບາບາວແກ້ ເລີຍປ່ອຍພຍາລຸງ
ແລ້ວຈິ່ງ ວອນຄຳແພງ ສັ່ງລຸງຄືຄອຍ
ຄ່ອຍໄປດີເຍີ້ ມະຫາກະສັດໄທ້ ຮຸ້ງຫລວງຊົງປະເສີດ ກູ້ເອີ້ຍ
ຄັນວ່າ ການທີ່ຮ້າຍ ຂໍເຈົ້າຢ່າໄລ ແດທອນ
ຄ້ອນສັ່ງແລ້ວ ທ້າວດັ້ນດົ່ງກາຍໄປ
ເຖິງດົງດອນ ປ່າຍາວດົງກວ້າງ
ທ້າວກໍ່ ໂຄຈອນເຊົາ ໄພສົນຫຼາຍລົ່ນ
ເຊົາປ່າໄມ້ ຢາມແຮວຄ່າຍຄືນ
ເຈົ້າກໍ່ ເຫັນພຍາສາມຊ້າງ ຄາຄືນຂວງຂາດ
ຊ້າງກໍ່ ກອຍກ່າວເວົ້າ ຈາຕາມພຣະຍອດຄຸ້ມ
ຂໍແກ່ເຈົ້າ ຜາຍໂຜດກູ້ມາ ແດທອນ
ອັນວ່າ ຄຸນໂມນີ ປູ່ຂໍ່ໄລລືມເຈົ້າ
ອັນວ່າ ໂກສົນນີ້ ເຫຼືອຫົວລົ້ນເກົດ ປູ່ແລ້ວ
ປູ່ຈັກ ຍໍໃສ່ເກົ້າ ຖນອມໄວ້ຊົວລ້າງ ປູ່ແລ້ວ
ຄ້ອນວ່າແລ້ວ ປະປ່ອຍພຍາສ້ານ
ມາຍຄືນຄຳ ອອກຄໍ່ພຍາຊ້າງ
ຍາມນັ້ນ ພຍາສາມຊ້າງ ຈາຂ່າຄ້ຳມ້ອນ
ປູ່ຈັກ ເວັ້ນມອບນອງ ນ້າງແກ້ວໃຫ່ແກບ້າ ແທ້ແລ້ວ

ທ້າວຕອບຕ້ານ ຈາພໍ່ພຍາຫຼວງ

ອັນວ່າ ນາງຄານເມົາ ທີ່ໃດເດເຈົ້າ

ໝັ້ນ ຣາຊສານຕ້ານ ຂານບາຄຳມ່ອນ

ອັນວ່າ ນາງມາດນ້ອຍ ແພງລ້ານຢູ່ຮາ ພໍ້ແລ້ວ

ຄ້ອນວ່າ ຈາກັນແລ້ວ ຊ້າງໃຫຍ່ຖອນງາ

ອັນວ່າ ນາງເຂັມມາ ອອກມາໃນງາຊ້າງ

ນາງນັ້ນ ຄືດັ່ງເມົາໃນຫ້ອງ ຄວງສວັນເທວະໂລກ ຈິງແລ້ວ

ກໍຫາກ ງາມບໍ່ເສົ້າ ສົມເຈົ້າພຣະຍອດນາງ

ຊາດໜີ້ ກໍຫາກເກີດຢູ່ຕັ້ງ ຫົວແຣດໄພພະນັງ ນັ້ນແລ້ວ

ຣາຫູ ຫາກຂົ່ມຣ່ອນຣ້າງ ຣານແກ້ວຫ່ອຍພຣະຈັນ

ຊາດທີ່ດວງຫອມນີ້ ຊິບານດາຍແລ້ງເມົາ ເປັນລີ

ຄຳຄິດຍັງທີ່ຟ້າ ຊິໝາຍນ້ຽນກະດູກດອມ

ຊາດທີ່ດວງຫອມນີ້ ປະສົງມີແຕ່ໃນປ່າ

ໃຜຜູ້ເດີນດູງດັ້ນ ຍັງຈະພໍ້ດອກຫອມ

ເປັນດັ່ງ ຣັດຕະນັງແກ້ວ ມະນີໂຊລູກປະເສີດ ຈິງມາ

ຍາມເມື່ອ ສຸບສອດຕາງ ກະຈອນແກ້ວໃສ່ຫູ

ກໍຫາກ ຫັນມະຊາດເຊື້ອ ແກ້ວເກີດຊົມພູ ແທ້ແລ້ວ

ຕາໄທຄີ ດັ່ງມັນງາຍອຍ

ພຍາພໍ່ເຈົ້າ ປຸ່ມປູກນາງງາມ

ຖວາຍແກ່ບຸນເຣືອງບາ ພໍ່ພຸດໂທວາງໃຫ້

ກັບທັງ ມະນີໂຊແກ້ວ　　ມະຫານິນພັນລູກ

ກັບທັງ ຜ້າທິບໄຫ້　　ສອງເຈົ້າມຸອບນອນ

ຍາມນັ້ນ ພຍາສາມຊາງ　　ປຸມຄວາມແລ້ວສັ່ງ

ໃຫ້ເຈົ້າຮັກອອນນ້ອຍ　　ແພງນ້ອງຢ່າໄດ້ໄລ　ພໍ່ເນີ

ໃຫ້ລູກ ທຳບຸນສ້າງ　　ສິນທານຢ່າປມາດ　ພໍ່ເນີ

ສິນແປດຕັ້ງ　　ຈຳໄວ້ຢ່າໄລ

ຫຼອນວ່າ ບຸນມີໄດ້　　ສເວີຍເມືອງຕູ້ມໄພ່　ບໍ່ຮູ້

ເຈົ້າຈົ່ງ ຮັກໄພ່ນ້ອຍ　　ຊຸມທ້າວຢ່າໂກດເຄັມ　ພໍ່ເນີ

ຄ້ອນວ່າ ພຣະສັ່ງແລ້ວ　　ເລີຍເລົ້າຍື່ມື

ໂຈມຕີນພຣະ　　ໃສ່ຫົວຖວິນໄຫວ້

ແລ້ວຈິ່ງ ສັ່ງພໍ່ເຈົ້າ　　ລາບາດພູທອນ

ຈິ່ງໃຫ້ ພຣະພໍ່ເຈົ້າ　　ຍິນໝົມໝື່ນວັດສາ　ແດ່ທ້ອນ

ຄ້ອນສັ່ງແລ້ວ　　ລາຈາກພູທອນ

ເອີ້ນນາງງາມ　　ທ່ຽວຄືນທາບານ

ສາມກໍ່ ວອຍ ໆ ຂ້າມ　　ໄພສິນຫຼາຍຍ່ານ

ຂ້າມປ່າໄມ້　　ຫຼາຍລານລູກດອຍ

ເຖິງສະຖານກວ້າງ　　ຂອບພຽງຢ້ຽມຜີ

ເຫັນທັງ ດອກເກດແກ້ວ　　ບານຊ້ອນເຮືອງງາມ

ມີທັງ ດອກຊ້ອນປ້ອນ　　ທອງເທດບົວບົກ

ທັງບົວຫຼວງ　　ເຮືອງງາມແກມກ້ານ

ເກສມາຟົ້ງ　　ຈູມຂານໃບແບ່ງ
ມະນີເທດສ້ຽວ　　ຮັງເຮື້ອສະເດື່ອຂານ
ນາມາຕົ້ນ　　ສູ່ງຕ່ຳຕີນຈຳ
ເບັງຊັນຂຽວ　　ແຄ່ງນົມນາງຍ້ອມ
ຍ້າຍຈາກຂັ້ນ　　ດັ້ນດຸ່ງກາຍໄປ
ແດດເຮັ່ງຮ້ອນ　　ຍາມແລງເຮັ່ງອ່ອນ
ທ້າວຈຶ່ງ　ຈາຣະຈາຕາມ　　ດອນກັນຫຼາຍສິ່ງ
ທ້າວຈຶ່ງ　ຈາອ່ອນຜູ້　　ຄິຄ້ອຍນາທະແພງ
ທ້າວກໍ່　ເວົ້າສູ່ຊົ້ນ　　ຄຳຍາກແອວນຖູ້ມັດ
ສາຍໃຈເອີ່ຍ　　ຄ່ອຍຟັງຄຳອ້າຍ
ນ້ອງເອີ່ຍ　ອ້າຍນີ້ລຳພອຍໄຮ້　　ແລ່ງງາຍເຂີນຂາດ　ຈິງແລ້ວ
ແມ່ນວ່າ　ເສື້ອຜ້າຕຸ້ມ　　ຮອງເນື້ອກໍ່ຂົມ
ພີ້　ເຮືອນມຸງຫຍ້າ　　ຫາເຟືອງມາຕູ້ມຫົ່ມ　ນາງເຮີຍ
ຫາແຕ່ສາດເກົ່າຫ້ຽນ　　ອິຮອງເນື້ອກໍ່ຂົມ
ພີ້　ທຸກຂ້ນອດໄຮ　　ຈຶ່ງໄດ້ຄ່ວາຂໍກິນ　ພີ່ແລ້ວ
ຫາແຕ່ອາພອນສັງ　　ພີ່ບໍ່ມີພົ້ນຕູນ
ນ່າງກ້າວຕາມ　　ດອນພີ່ສາຍໃຈ
ເອົາແຕ່　ບູຮານເປັນ　　ບໍ່ອາດຂີນຖຽງໄດ້
ແມ່ນ່ວາ　ເປັນຂ້ອຍຂ້າ　　ຫ້າສາໃຈ່ຊວງ　ກໍ່ດີ້ຫອນ
ມັນຫາກ　ຄາດແຕ່ຟ້າ　　ນາເຈົ້າອິວ່າລິ　ນັ້ນເດີ້

ຄ້ອນກ່າວແລ້ວ　　ເຖິງແກ່ວແດນເມືອງ

ສາມກໍນຳທາງເຖິງ　　ຮອດເຮືອນພອຍໄຮ້

ແຕ່ນັ້ນ　ໄອຍະກາເຖົ້າ　　ເຫັນຫຼານມາຮອດ

ຫັວເລົາ　ເຫັນຜິປ່ານ້ອຍ　　ນາງແກ້ວລູກແມ່ນ

ຍ່າກໍໄປຮັບຕ້ອນ　　ນ້ອຍອ່ອນນູອບານ　ຢູ່ແລ້ວ

ສາຍໃຈມານຳຂາ　　ຄອບພຣະຄຸນຈອມເຈົ້າ

ຍ່າກໍໄປຮັບນ້ອຍ　　ແກ້ວແກ່ນເຂັນມາ

ນາງຫາກ　ໄດ້ກໍສ້າງ　　ອະມັນຕິ້ແຕ່ຫຼັງ

ເທືອນີ້　ຂຸນປະກອບໄດ້　　ມາຮ່ວມຮຽງສະຖານ

ເຮົານີ້　ເປັນດັ່ງອຸທອນດ່ຽວ　　ແມ່ຄຸນຈິງແທ້

ນາງຍ່າ　ຈຽມພອກຂ້ອຍ　　ມະໂນໃນຍ່າ

ເຮົາຫາກ　ໄດ້ກໍສ້າງ　　ນຳທ້າວແຕ່ຫຼັງ

ຍາມນັ້ນ　ນົງທ່າວເນື້ອ　　ເຂັນມາຮາດຂານຄຳ

ຂໍແກ່ພຣະແມ່ເຈົ້າ　　ກູມາຂ້າໂຜດພາຍ　ແດ່ທ້ອນ

ຍ່າເອີຍ　ຂຸນແຕ່ບຸເພສ້າງ　　ພາຍຫຼັງມາຮອດ　ຈິງມາ

ນ່ອມຂໍຝາກໄວ້　　ຊິວັງເນື້ອນອບຖວາຍ

ແຕ່ນັ້ນ　ຍ່າກໍຫາມາພ້ອມ　　ພາຂວັນຮຽງພ່າງ

ກ້ວຍອ້ອຍພ້ອມ　　ໂຮມເຂົ້າສູ່ຂວັນ

ມາເຍີ　ຂວັນອ່ອນນ້ອຍ　　ນາງມາດເຂັນມາ　ຍ່າເຮີຍ

ຫັວຂວັນບາ　　ເຂົ້າມາຮຽມອງ

ມາເຍີ້ ຂວັນຜິນ້ອຍ ທັງບາໃຫ້ເປັນຄູ່ ກັນທ້ອນ

ຢ່າໄດໄລບ້າຄ່ານ ໃຫ້ຢູ່ຍິນຍາວໝັ້ນ

ມາເຍີ້ ຂວັນນ້າງແກ້ວ ຢ່ານອນແຮມເຣື້ອຢ່າ ນັ້ນເນີ້

ຂໍໃຫ້ ມາຮ່ວມທ້າວ ຍິນໝັ້ນໝີ້ນປີ ແດ່ທ້ອນ

ມາເຍີ້ ຂວັນຜິນ້ອຍ ອັນຫຼົງຢູ່ຫິມະພານ ນັ້ນເຣີຍ

ກັບທັງ ຂວັນນາງງ້ານ ເຂົ້າຮ່ວມມາຮ້ຽງທ້າວ

ຄ້ອນວ່າ ບໍ່ຣະບວນແລ້ວ ຄູນຂວັ້ນແລ້ວຢ່າ

ທາເຂົ້ານໍ້າ ມາຫາງສູ່ກິນ

ພໍ່ພອນແລ້ວ ຖອຍພາລ້າເລີກ

ນໍ້າດອກໄມ້ ທະໄລລ້າງສ່ວຍມື

ແລ້ວຈິງທ້າງ ແປ່ງບ່ອນເມີ້ານອນ

ສອງແພງຮັກ ຮ່ວມກັນໃນຫ້ອງ

ຫ້າວກອດຕູ້ນ ນ້ອຍອ່ອນເຂັ້ນມາ

ຊົມນາງງ້າມ ຮວມຮຽງແພງນ້ອງ

ພໍ່ຄາວແລ້ວ ຜາຍລ້າຍແລ່ວຮຸ່ງ

ນາງກໍ່ ຫຼຸງເຂົ້າແລ້ວ ມ້າຫາ້ງສູ່ກິນ

ພໍ່ປະມາແລ້ວ ຜີແຕ່ງແປ່ງສະຖານ

ຕາມບູຮານ ຢູ່ດີບໍ່ມີຮ້ອນ

ສອງແປງສ້າງ ຮ່ວໄຣມາສອນ

ຢູ່ທ່າງ ຫົງຈໍາສິນ ຢູ່ສະບາຍບໍ່ມີຮ້ອນ

ຫຼາຍວັນແລ້ວ　　ປີເດືອນແຖມຖ່າຍ　ມາແລ້ວ<br>
ສາມແຈ່ມເຈົ້າ　　ບໍ່ມີຮອນເຍື້ອງໃດ<br>
ຂໍໂຈະບຶດຂຶ້ນ　　ບາຄາມໄວ້ສາກ່ອນ<br>
ຫາກຈະກ່າວຂໍ້　　ພາຍໜ້າຕໍ່ໄປ<br>
ບັດນີ້　ຈັກກ່າວເຖິງແຖມຫຼວງເຈົ້າ　ເມືອງແມນຕົນອາດ　ກ່ອນເນີ້<br>
ພຣະບາດເຈົ້າ　　ທົງສ້າງໜື້ມນານ<br>
ອັນວ່າ　ເທີແກ້ວ　　ນໍຣະນາຕາຍຈາກ　ພຣະອົງແລ້ວ<br>
ພຣະກໍທົງຢູ່ສ້າງ　　ນອນແລ້ງເປົ່າດາຍ<br>
ແລ້ວຈິ່ງ　ໂອວາດຕານ　　ຝູງໝູ່ຊາວຊຸມ<br>
ສູ່ຈົ່ງ　ໄປສແວງຫາ　　ລູກແມນນະຄອນຟ້າ<br>
ຍາມນັ້ນ　ຊຸມກໍຍໍມືໄຫວ້　　ລາລົງໂດຍຣີບ<br>
ຊຸມກໍ　ຂຶ້ນຂີ່ມ້າ　　ດາຍາຍອອກໄປ<br>
ມັນກໍ　ແຍງຕົນທ້ອງ　　ເມືອງແມນກໍພົດຂອບ<br>
ທຸກທົ່ວຫ້ອງ　　ນະຄອນຟ້າທົ່ວແດນ<br>
ກໍບໍ່　ເຫັນນາງແກ້ວ　　ມົງທ່າວນາຣີ<br>
ທັງເມືອງແຖມ　　ທົ່ວແດນນະຄອນຟ້າ<br>
ແລ້ວຈິ່ງ　ມາຄອບເຈົ້າ　　ແຖມຣາຊເລັງໂຍ<br>
ກໍບໍ່　ເຫັນແດນໃດ　　ເຂດຊົງເມືອງບ້ານ<br>
ແຖມຈິ່ງຈຳໃຫ້　　ຊຸມບົວລົມສ່ອງອອນ<br>
ເຊື່ອຈົ່ງ　ລົ່ງລຸ້ມຟ້າ　　ນະຄອນພຸນທີບຄົມ　ຫ່ອຫ້ອນ

ຄັນຫາກ  ເຫັນນາງແກ້ວ  ແດນໃດບິນຂອກ  ມາເຫັ້ນ
ກູຈັກ  ຕົກແຕ່ງໃຫ້  ຂຸນທ້າວທ່ຽວຊົມ  ແທ້ແລ້ວ
ຄອນວ່າ  ພຣະກ່າວແລ້ວ  ຂຸນເລີກລາລົງ
ທົ່ງອາຈະໄນ  ລ່ວງລົງນີຈາ
ກໍຈຶ່ງ  ໄປເຖິງທ່ອງ  ຊຸມພູເມືອງລຸ່ມ
ຂຸນກໍ  ແລລ່ຳຢ້ຽມ  ທົ່ງຄ້າຍທົ່ວແດນ
ແລ້ວຈຶ່ງເຂົ້າ  ໄປສູ່ເມືອງຊ້ວາ
ທົ່ງລົວໄປ  ທົ່ວແດນທົ່ງຄ້າຍ
ເລີຍລ່ວງເຂົ້າ  ເຖິງເຂດເມືອງເມັງ
ທົ່ງເປັງຈານ  ລ່ວງໄປນີຈາ
ມາເຖິງທອງ  ເມືອງທວງສີສະເກດ
ກາຍປະເທດນັ້ນ  ໄປພ້າບໍ່ເຊົາ
ກໍບໍ່  ເຫັນນາງແກ້ວ  ແດນໃດຈັກແຫ່ງ
ກໍຈຶ່ງ  ແຖມແສ້ນມາ  ໄປພ້າບໍ່ເຊົາ
ກໍຈຶ່ງ  ເລີຍລ່ວງເຂົ້າ  ຊົງເຂດສາວັດຖີ
ແຍງ ເບິ່ງຫຼວງ  ເຂດເມືອງມະຄອນກວາງ
ກໍຈຶ່ງ  ເຫັນນາງແກ້ວ  ດວງຕາເບິ່ງວິມານ
ກໍຫາກ  ເປັນນິ່ງເຫງົ້າ  ບາທ້າວທ່ຽງຈຶ່ງ  ແທ້ແລ້ວ
ຂຸນຈຶ່ງ  ຄືນເມືອຫ້ອງ  ເມືອງແຖມສັນເກົ່າ
ຂຸນກໍ  ອົ້ນຂາບໄຫວ້  ທູນເຈົ້າທີ່ເຊົ້າ

ຊຸມກໍ່ ເວົ້າພາກພົ້ນ ຕາມແຕ່ສັດສິນ

ຖວາຍຣາຊາ ຊູ່ອັນສັດຖ້ວນ

ຂ້າກໍ່ ລຽບຂອບຟ້າ ຊຶ່ງເຂດຊົມພູ

ໃນເມືອງຄຸ້ມ ຊູ່ແດນຜາຍຜຽນ

ກໍ່ຈິ່ງ ວຽນມາເຂົ້າ ສາວັດຖີເມືອງນີ້ ພາຍພັ້ນ

ກໍ່ຈິ່ງ ເຫັນນາດນ້ອຍ ນ່າງແກວຮູບງາມ

ທໍ່ວາ ອ້າຍກ່ຳພ້າ ທຽມແທບນາງງາມ ແທ້ແລ້ວ

ແມ່ນວ່າ ສົມນາງຄື ດັ່ງອິນລົ້ງແຕນ

ຊື່ວ່າ ເຂັມນາແກ້ວ ສົມໄວສເນີ່ຫູ ຈິ່ງແລ້ວ

ຜົ້ງຂາແລລ່ຳຢ້ຽມ ຄິ້ແຕນແຕ່ພົມ ເຈົ້າເອີຍ

ແຕ່ນັ້ນ ແຖນຫຼວງຕ້ານ ຂານຊູນກ່ອຍກາວ

ສູ່ຈິ່ງລົງລຸ່ມຟ້າ ພາຍພຸມປ່າວເຊີງ ກ່ອນເຫັ້ນ

ທຸກໝູ່ທ້າວ ຜີ່ປ່າທັງສັດ

ສູ່ຈິ່ງ ປັດເຂົ້າມາ ຊູ່ຕົວຢ່າຄາງ

ຄ້ອນວ່າແລ້ວ ຊຸມເລີກລາລົ້ງ

ເຖິງເມືອງຄຸ້ມ ປ່າວຜີເມືອພ້ອມ

ບັດນີ້ ແຖນຫຼວງທ້າວ ຈຳຕູ້ມາປ່າວ

ສູ່ຈິ່ງບອກຊູ້ດາວ ທັງຄາຍເຂດຊົງ

ມາເຍີ້ ຜີຍະອ້າຍພ້ອມ ຜີມົ້ນຜີ່ປ່າ

ກັບທັງ ຜີເຊື້ອບ້ານ ທັງຄາຍຊູ່ຕົວ

ກັບທັງ ຜີສາງພ້ອມ ໝີເພື່ອຍຜີປ່າ ມາຫ້ອມ

ກັບທັງ ນົກແລະຣອກຈອມ ທັງຄ້າຍກໍປ່າວໄປ

ຄັນວ່າ ໃຜບໍ່ຂຶ້ນ ເມືອສູ່ເມືອງແຖນ ດັ່ງນັ້ນ

ພຣະຈັກຟັນຫົວເສັງ ໃຫທາວຕາຍລາງແລວ

ຄ້ອນວ່າ ຂຸນປ່າວແລ້ວ ສະເດັດຕ່າວຄືນເມືອ

ເຖິງເມືອງແຖນ ຢູ່ສະບາຍບໍ່ມີຣ້ອນ

ແຕ່ນັ້ນ ເຂົາກໍຈັກນອດນ້າວ ຝູງໝູ່ຄະນາສັດ

ທັງຜີສາງ ຍັກເຍັນຄະນາເນື້ອ

ແລ້ວຈຶ່ງ ໂຮມກັນຂຶ້ນ ຜີສາງທຸກໝູ່

ເຂົາກໍ ຕຸກເຕັ້ນຂຶ້ນ ເມືອຟ້າຊູຕົວ

ໃຕແຜນຫຼາ ຝູງໝູ່ຄະນາສັດ

ເຂົາກໍ ໂຮມກັນເມືອ ສູ່ເມືອງສວັນຟ້າ

ເຂົາກໍ ປັດຂອດຂຶ້ນ ເມືອສູ່ເມືອງແຖນ

ທັ່ງນາຄຯ ເງືອກງູກໍເມືອພ້ອມ

ບັດນີ້ ຈັກກ່າວເຖິງຜີມ້ອຍ ດູຫຼາກແອນຖນັດ ແທ້ແລ້ວ

ເຂົາເລົ່າ ເມືອເມືອງບົນ ເຫດໃດເດເຈົ້າ

ຜີຈຶ່ງ ຕ້ານສັ່ງອ້າຍກ່ຳພ້າ ຕົນພີ່ສາຍໃຈ

ຜີກໍ ຈັດເມືອເມືອງບົນ ເຫດໃດບໍ່ມີຮູ້

ຄ້ອນວ່າ ຜີສັ່ງແລ້ວ ເລີຍເລົ່າເມືອເຖິງ

ເຖິງເມືອງແຖນ ກາບທູນຖວິນໄທ

ກໍຫາກ ທຸກທົ່ວຟ້າ ຝູງໝູ່ຄະນາສັດ
ທັງຜີສາງ ຊູ່ຕົວພຽງພ້ອມ
ຍາມນັ້ນ ເຂົາກໍແຊວໆໄຫວ້ ພຍາແຖນກົ້ມຂາບ
ກໍຫາກ ທຸກທົ່ວຟ້າ ຖອິນໄຫວ້ຢູ່ຊະລອນ
ເມື່ອນັ້ນ ພຍາແຖນຕ້ານ ຈາເຂົ້າທຸກໝູ່
ກູກໍ ຄິດຢາກໄດ້ ນາງແກ້ວພະຍອດຍິງ
ຍັງມີ ເບັງອິນາດແກ້ວ ຊື່ວ່າເຂັມມາ
ເມົາເຄັ້ງ ຢູ່ດອນຊາຍໄຮ້
ນາງຫາກ ເມົາຢູ່ຫ້ອງ ເມືອງໃຫຍ່ສາວັດຖີ ທີ່ພຸ້ນ
ໃຫ້ສູ່ຜິປອງຄິດ ຊ່ອຍມາເປັນເຫງົ້າ
ນັບແຕ່ ຝູງມົກພ້ອຍ ທຸກໝູ່ປ່າ ນັ້ນມາ
ສູ່ຈົ່ງຄິດໃຫ້ໄດ້ ວັ່ນພາຣອນງ່າຍ ນັ້ນທ້ອນ
ໃຜຈັກອາສາໄດ້ ເອົານາງຖວາຍບາດ ກູນັ້ນ
ກູຈັກ ເວັ້ນນອບໃຫ້ ຣາງວັນນັ້ນແກ່ມັນ ແທ້ແລ້ວ
ເທື່ອນີ້ ໃຜຈັກອາສາໄດ້ ຂານມາໂດຍຣິບ ເຣ່ວທ້ອນ
ໄປກ່ອນພ້າ ວັນນີ້ຣິບພລັນ
ແຕ່ນັ້ນ ອ້າຍນົກເຄົ້າ ຂານກ່ອນຝູງເຂົາ
ອອນຈັກໄປເອົານາງ ຫ່ຽອນມາຖວາຍເຈົ້າ
ທີ່ນັ້ນ ແຖນຈິ່ງຕ້ານ ແພຄຳກອຍກ່າວ
ນີ້ງຈັກທຳສັ່ນໃດ ຈິ່ງຊິເອົາມັນໄດ້

ຍາມນັ້ນ ອ້າຍນົກເຄົ້າ ຕ້ານຕອບແຖນເລິງ
ອ້ອມຈັກ ບິນໄປຈັບ ທີ່ເສົາຊານຮອງ
ຄ້ອມວ່າແລ້ວ ຜີເລົ່າລາລົ້ງ
ເຖິງບາຄານ ພົ່ນຈາຕານ
ເທື່ອນີ້ ແຖນກໍບອກອ້າຍນົກເຄົ້າ ລົງກ່ອນຝູງເຂົາ
ແຖນຈັກ ເອົານາງຄານ ຫງ່ອເມືອເປັນເຫງົ້າ
ຜູ່ຂໍ້ຊ້າ ເຣືອຣິບແປງກີງ
ຕາມປີນພິດ ແຕ່ງດີດາຖາ
ເມື່ອນັ້ນ ແຖນກໍປົງທານໃຫ້ ຮາງວັນທານທອດ
ເສື້ອຜ້າໃຫ້ ຄຳແກ້ວແກ່ນັ້ນ
ແລ້ວຈຶ່ງ ປົງອາດໃຫ້ ເປັນທ່ານເພັຽນົກ
ນັບແຕ່ ໃນຄີຣີ ກໍ່ວ່ານັ້ນເປັນອ້າຍ
ແຖນກໍວາງເວນໃຫ້ ບໍຣິວານຮ້ອຍນຶ່ງ
ແລ້ວຈຶ່ງ ປູກຫຸ່ມນ້ອຍ ວາງໃຫ້ແກ່ນັ້ນ
ນົກຈິກໃຫ້ ເປັນພີ່ແສນທານ
ພຣະກໍ ປົງນາມມະຍົດ ໃຫ້ແກ່ນັ້ນຈຶ່ງແທ້
ນົກໃສ່ທອນຂວັນໃຫ້ ເປັນພີ່ແສນຕາ
ປົງນາມມະຍົດ ໃຫ້ແກ່ນັ້ນຈຶ່ງແທ້
ພຣະກໍ ປຸນປູກຕັ້ງນົກຄໍດາວໃຫ້ ເປັນອາວສົບວຽກ
ພຣະບາດຕັ້ງ ຕາມເຊື້ອສົບມາ

ນົກຂໍ່ໝອງໄຫ້ ເປັນພົ້ນນາມຕາມ
ພຣະກໍ ປົ່ງໄຫ້ເປັນແສນ ແມ່ນນາມຕາມເຊື້ອ
ແລ້ວຈຶ່ງ ປຸນປູກຕັ້ງ ນົກແຂກສານກາ
ປົ່ງໄຫ້ເປັນແສນຂວາ ແຕ່ງຕາມງາມເຊື້ອ
ນົກກົດປີດໄຫ້ ເປັນແສນທົ້ວພົນ
ນົກກອຍດ່າງ ວາງໄຫ້ເປັນຂຸນ
ກະຈາຍພຣະ ຖ່າຍນາມປຸນຕັ້ງ
ຄ້ອນວ່າ ບໍ່ຣະບອນແລ້ວ ຕົກແຕ່ງເຣືອພລັນ
ຍໍຣິວານລົງ ພໍ່າພຣະອົງພໍຣອຍ
ນັ່ງ ຜີສາງເຊື້ອ ລົງນຳພື້ນ
ເຂົາກໍ ແຫນແຫ່ເຈົ້າ ລົງຟ້າມືດມົວ
ເຂົາກໍ່ ຍາບໆຍາຍ ບິນນຳຊົ່ມຊຸມ
ເພິ່ງກໍ ບິນລ່ອງເຂົ້າ ມາໃກ້ຈົມຈົ້ມ
ບໍ່ຣິວານລົ້ ເທິງເຮືອນແຄມປ່າ
ເພິ່ງກໍ ບິນລ່ອງເຂົ້າ ແຍງເທົ້າເຂດເຮືອນ
ເພິ່ງກໍ ບິນລ່ອງເຂົ້າ ຈັບຢູ່ເສົາຊານ
ຍໍຄົ່ຍົກ ອ່ານນົມເລີຍຮ້ອງ
ກູກ ໆ ຮ້ອງ ສານເທື່ອເປັນລາງ
ມາເຍີ່ ຂວັນນາງງາມ ຂັ້ນສູ່ເມືອງສວັນຟ້າ
ແຕ່ນັ້ນ ຜີປ່ານ້ອຍ ມັນກົ້ງສາຍທະມູ

| | | |
|---|---|---|
| | ຕາມປີນພິດ | ສອດຍິງບໍ່ມີຊ້າ |
| | ປີນສູ່ແວງເຂົ້າ | ທີວໃຈຊູອດຜາດ |
| ເພັງກໍ | ຕີກຢູ່ຄາງ | ຊານທາວຄອບກັນ ແທ້ແລ້ວ |
| | ຜີກໍເອົາຍັງຄ້ອມ | ເລີຍຕີບີບອບ |
| | ຕັບແຕກຟົ້ງ | ຕາຍມ້ຽນຈີບພະວັງ |
| | ບໍ່ຣີວານຢ້ານ | ໝີຄືມຟ້າວຟັ່ງ |
| ເຂົາກໍ່ | ຂຶ້ນຂາຍໄທ້ວ | ແຖມເຈົ້າກ່າວໂຍນ |
| ເມື່ອນັ້ນ | ແຖມຫຼວງເຈົ້າ | ຈາເຊົາຊ້ຳກ່າວ |
| ໃຜຈັກ | ເອົາໃທ້ໄດ້ | ຈີງແທໄທກ່າວມາ ທຽວທ້ອນ |
| ອັ່ນວ່າ | ຜີປ່ານ້ອຍ | ມັນຣີບເຣວເມືອ |
| | ເຖີງເມືອງແຖມ | ຢູ່ຟັງຄຳເວົ້າ |
| ບັດນີ້ | ຈັກກ່າວເຖີງພະບາດເຈົ້າ ງູເທົ່າທີວລີດ ກ່ອນແລ້ວ | |
| | ມັນກໍຍໍຄືຄາມ | ຕອບພຍາແຖມຟ້າ |
| | ຂ້າຂໍອາສາເຈົ້າ | ລົງໄປແວນທ່ຽວ |
| | ຂ້າຈັກເອົາໃທ້ໄດ້ | ໂດຍດ້ານດັ່ງໃຈ |
| ແຕ່ນັ້ນ | ແຖມຈິງທານາມເຊື້ອ | ປູນປູກພຍາງູ |
| | ແຖມກໍວາງຄຳພົນ | ໄທແກ້ມັນຈີງແທ້ |
| | ງູກໍຍິນດີໄດ້ | ຮາງວັນຊົມຊື່ນ |
| | ຍັງເລົ່າເຄັມໂກດກ້າ | ແຂງເຂັ້ມບໍ່ກົວ |
| | ແຖມກໍວາງເວນໄທ້ | ບໍ່ຣີວານຮ້ອຍນື່ງ |

| | | |
|---|---|---|
| | ໃຫ້ແກ່ເຈົ້າ | ໄປພ້ອມຊ່ອຍປອງ |
| ແມ່ນວ່າ | ຂຸນເລີງຕ້ານ | ຖາມງູຄຳນ່ອນ |
| | ເຈົ້າຈັກທຳສັນໃດ | ກໍ່ຈົງເອີາໃຫ້ມັນໄດ້ |
| ທີ່ນັ້ນ | ພຍາງູຕ້ານ | ຂານຕອບແຖນເລີງ |
| | ຣຽມຈັກຣວາຍມີນໄປ | ເຂົ້າໄຫນວຍລີ້ |
| ພໍເມື່ອ | ແສງສຸຣິເຍດຍ້າຍ | ພົ້ນຂອບເຂົ່າເຣືອງ ດັ່ງນັ້ນ |
| | ນາງທາກລູກໝົ້ງເຂົ້າ | ຍາມເຊົ້າກໍ່ຈົງເອີາ |
| | ຄ້ອນວ່າແລ້ວ | ຜີ່ປາລາລີງ |
| | ເຖິງກຸມ່ານ | ພື່ຕົນຈາຕານ |
| ບັດນີ້ | ແຖນທອງໃຫ້ | ພຍາງູມາອີກ ຈິງແລ້ວ |
| | ເຮົາຢ່າຊ້າ | ດາຫາງແຕ່ງດີ ຫຽວເທັ້ນ |
| | ເຈົ້າຢ່າໃຫ້ອ່ອນນ້ອຍ | ລູກຕື່ນຫຸງງາຍ ນັ້ນເນີ່ |
| | ອອນຈັກທຳພຽນທຸງ | ບໍ່ໃຫ້ເຄືອງພະອົງເອີ້ຍ |
| | ຄ້ອນວ່າແລ້ວ | ຜີເລົ່າລາລີ້ງ |
| | ຍື່ທີນແລງ | ແບກມາລຽມໄວ້ |
| | ສອງກໍ່ເຫຼົ້າຟ້ອຍໄວ້ | ແປງໄຟດົ້ນເຣືອ |
| | ສຸ່ມຖານໄວ້ | ດາຖາຊູ້ອັ່ນ |
| | ສອງແປງແລ້ວ | ພາກັນລີ້ຢູ່ |
| ຂ້າທາກ | ຮູ້ເຫດແລ້ວ | ງູ້ໃບແວ່ງອນ |

ບັດນີ້ ຈັກກ່າວເຖິງພຍາງູເຈົ້າ ກົງຣິດທີ່ຈົບເພດ ກ່ອນແລ້ວ

ແຖມກໍທານທອດໃຫ້ ຣາງວັນແກ້ວແກ່ມັນ
ຄຳພັນໃຫ້ ພຍາງູທານທອດ
ມັນໄດ້ແລ້ວ ຫົວຈົ້ມຊຶ່ມຊົມ
ມັນຈຶ່ງເອົາແຂວນໄວ້ ຄໍມັນເປັນຮີດ ມານັ້ນ
ເຮົາຈຶ່ງໄດ້ເຍື່ອງເຄົ້າ ປາງນັ້ນສືບມາ ເຈົ້າເອີຍ
ພໍປະມານແລ້ວ ພຍາງູລາເລີກ
ສາຈາກເຈົ້າ ແຖມຟ້າຮີບລົງ
ງູກໍທຳຣິດກາ ເທາະທອບປອນລົມ
ບໍຣິວານລົງ ພ່ຳພຣະອົງແທ່ນເຈົ້າ
ເຂົາກໍເລີຍລ່ວງເຂົ້າ ເຖິງເຂດເຮືອນພອຍ
ພໍປະມານເລີຍ ທ່ຽງຄືນຄືຄ້ອຍ
ງູຈຶ່ງລີເລືອເຂົ້າ ໄຫມວຍລີ້ຢູ່ ຫັ້ນແລ້ວ
ແມ່ນວ່າ ສອງອ່ອນນ້ອຍ ແພງລ້ານຄ່ອຍຣະວັງ
ກໍທາກ ພໍຍາມແລ້ວ ເອົາຫີນແລງອັດແຈບ
ສອງກໍສຸມຖ່ານໄວ້ ແຮງຟ້າວເປົ່າໄຟ
ໄຟລຸກແລ້ວ ອາຍອອກເຮວແຮງ
ງູກໍຫົນໆຕາຍ ນຶ່ງນໍຣະນາມຮຸ້ນ
ບໍຣິວານຍ້ານ ໜີຄືນຟ້າວຟັ່ງ
ເມື່ອຂາບໄຫວ້ ແຖມເຈົ້າກ່າວໂຍມ
ໃຜບໍ່ມີໄປໄດ້ ກົວເກງຍ້ານສັ່ນ ເສັງແລ້ວ

ໃຜບໍ່ ມິກ່າວກ້າ ຍິນຢ້ານທຸກຕົວ ແທ້ແລ້ວ
ຄາວນັ້ນ ຜີ່ປ່ານ້ອຍ ມັນຣິບເມືອໄວ
ເຖິງເມືອງແຖນ ຢູ່ຟັງຄຳເວົ້າ
ຂັດນີ້ ຈັກກ່າວເຖິງພຍາແຖນຟາ ປຸ່ມຄຳກອຍກ່າວ
ໃຜຈັກຂັນອາສາ ກ່ອນກູລິ້ໄດ
ແຕ່ນັ້ນ ອ້າຍບ່າງລ໊ອ ຂານຕອບພູທອນ
ຂ້າຂໍ່ຂັນອາສາ ກ່ອນພຣະອົງຕາງເຈົ້າ
ພຣະກໍ່ເວນອາງໃຫ້ ຣາງວັນທານທອດ
ເສັ້ອຜ້າໃຫ້ ຄຳແກ້ວແກ່ນັ້ນ
ມັນໄດ້ແລ້ວ ຍິນຊື່ນຊົມບານ
ມັນກໍ່ເອົາກາສາ ຫຸ້ມທົ່ວພົນຕູ້
ມັນທໍ້ຫຸມ ທຸກແຫ່ງຕີນມື
ແພພົນປົກ ຫົ່ມດີເລີຍແລ້ວ
ບ່າງຈໍງໄດ້ຣິດໄວ້ ປາງແຕ່ແຖນທານ
ຕາມນາມມະຍົດ ສິບມາຢາງນັ້ນ
ເມື່ອນັ້ນ ແຖນຈໍງປຸ່ມປູກຕັ້ງ ຕາມແຫ່ງນາມມະຍົດ
ພຍາແຖນປົງ ຊື່ນາມປຸ່ມຕັ້ງ
ຊື່ວ່າເພັງບ່າງລ໊ອ ຕາມຊື່ນາມມັນ
ປູກໃຫ້ເປັນບູຣານ ສິບມາປາງນັ້ນ
ຄ້ອນວ່າແລ້ວ ຜີ່ປ່າລາລົງ

ເຖິງກຸມານ　　ພິດົມຈາຕ້ານ
ບັດນີ້　ພຍາແຖນຊ້ຳ　　ຈາບ່າງລົງມາ　ແທ້ແລ້ວ
ມັນຈັກບິນເວຫາ　　ຢູ່ເທິງກອນຮອງ
ເທືອນີ້　ເອົາແຕ່ຂຸມຮາທ້ອມ　ສົມພານເສັ້ງສ່ຽງ　ດູ້ມັ້ນ
ເຣົາຈົ່ງໄຫວ້ແກ່ທ້າວ　ທັ້ງຄ່າຍຊ່ວຍຊູ
ອັນນຶ່ງ　ເຈົ້າຢ່າວ່າງນາງແກ້ວ　ເຂັ້ນມາອຸ້ມກອດ　ໄວ້ເນີ້
ໜຶ່ງຈັບເກດເກົ້າ　　ນາງນ້ອຍຢ່າໄລ　ແດ່ເນີ້
ຄ້ອນວ່າແລ້ວ　　ເພັຽບ່າງລາລົງ
ເຖິງເວຫາ　　ອ່ານມົນເລີຍຮອງ
ມັນກໍ　ແກ້ວ ໆ ຮອງ　　ສຽງຫອງອາກາດ　ພຸ້ນເຍີ້
ມາເຍີ້　ຂວັນອ່ອນນ້ອຍ　　ຈົ່ງເມືອສາງສືບເມືອງ
ມາເຍີ້　ຂວັນນາງແກ້ວ　　ເຂັ້ນມາເຈົ້າພີ້　ແພງເອີ້ຍ
ນ້ອງຈົ່ງມາສືບສ້າງ　ເມືອງກວ້າງເພື່ອນແຖນ　ແດ່ເນີ້
ຄ້ອນວ່າ　ຂ່າງຮ້ອງແລ້ວ　　ນາງທ່າວສລົບໄປ
ກໍຫາກວອຍໆຈິດ　　ຫອດໄປຍາມນັ້ນ
ສຸດແຕ່ທ້າວກູກເອີ້ນ　ຮ້ອງຮຽກຂວັນນາງ
ແພງຕາເອີ້ຍ　　ນ້ອງຄ່ອຍຄືນມາຫອມ
ແມ່ນວ່າ　ທ້າວໜຸ່ມໄທ　　ພໍເລືອດຕາໄຫຼ
ບາກໍເຫຫວງທຸກ　　ເວຫນາຍົມຍອຍ
ອັນວ່າ　ນາງຄານນ້ອຍ　　ນໍຣະນາລົດຊົ່ວ　ຍາມນັ້ນ

ນາງກໍເມືອເກີດກ້ຳ　ເມືອງຟ້າຟາກແຖນ
ຄັນວ່າ ບຸນຄາດເກື້ອ　ແຖນຈູບຶນເຊີຍ　ແລ່ນ
ແຖນກໍປີ້ງສັດໃຫ້　ແຕ່ງດ່ອງດ້ອນ
ແລ້ວຈຶ່ງ ມີອາຖໃຫ້　ຊຸ່ມຣາຊ່ເລ້ງໂຍ
ວ່າໃຫ້ປຸ້ມເງິນຄຳ　ໃສ່ພານມາຕັ້ງ
ສູ່ຈຶ່ງ ພາກັນຂາ　ຜູ້ໝູ່ງົວຄວາຍ　ນັ້ນເນີ້
ທັງເມືອງແຖນ　ປ່າວມາໃຫ້ຕົງຖ້ອນ
ທັງມວນຂ້າ　ຮ້ອຍຄູ່ງົວຄວາຍ　ນັ້ນເນີ້
ກັບທັງ ໝູ່ໄກ່ພ້ອມ　ພໍ່ຮ້ອຍຄູ່ພາ　ນັ້ນເນີ້
ແຕ່ນັ້ນ ຊຸມກໍຣົມໆພ້ອມ　ເສນາທຸກໝູ່
ເຂົາກໍ ໂດຍອາຖູເຈົ້າ　ດູ້ທາງແຕ່ງຕາມ
ເຂົາກໍ ພາກັນຂາ　ຮ້ອຍຄູ່ງົວຄວາຍ
ເຂົາກໍ ທຳທຸງແກວ　ລາບດັ້ທັງກອຍ
ກັບທັງ ພິກນອກປີ້ງ　ຕົ້ມຈິດແກວຊຸ້ບ
ເຂົາກໍ ຣົມ ໆ ຄືວ　ແຕ່ງພາພຽງພ້ອມ
ຍາມນັ້ນ ພາມຸະນາເຂົ້າ　ຄູນຂວັນພຸອະນາດ
ຂໍໃຫ້ ພຣະບາດເຈົ້າ　ຍິນໝັ້ນໝື່ນປີ　ແດ່ທ້ອນ
ຂໍໃຫ້ ລີ່ຊາເທົ້າ　ຄວງສວັນເທວະໂລກ　ເຣົາພັ້
ລີເດດທຸກທ່ອນທ້າວ　ມານ້ອນເພິ່ງບຸນ　ແດ່ທ້ອນ
ຄ້ອນວ່າ ບໍ່ຣະບອນແລ້ວ　ຄູນຂວັນລາເລີກ

　　　　ທຸກທ່ອນທ້າວ　　ທັງຄ້າຍຊື່ນຊົມ
ຝູງໝູ່　ສັດລຸ່ມຟ້າ　　ຍິນຊື່ນຊົມບານ
　　　　ມາມາເຂົາ　　ໝູ່ຄະນາຜີເຊື້ອ
ເຂົາກໍ່　ຕີເສບເຈົ້າ　　ທັງຊຸ່ຍລະບຳຊໍ່
　　　　ທັງຫອຍສັງ　　ເສບງັນພຣະເມືອງເຈົ້າ
ເຂົາກໍ່　ແຊວ ໆ ຫຼົ້ນ　　ພາສາຫຼາຍສ່ຳ
ກັບທັງ　ຜີປ່າເປົ້າ　　ຄະນາເຊື້ອຄ່າງລີງ
ເຂົາກໍ່　ເອົາກັນຫຼົ້ນ　　ເມືອງແຖນຊົມຊື່ນ
ຍູ່ທ່າງ　ກິນລາບກອຍ　　ທັງເຫຼົ້າມື່ນມັນ
ຂັດນີ້　ຈັກກ່າວເຖິງຜີນ້ອຍ　　ຍັງຢູ່ເມືອງແຖນ : ກ່ອນແລ້ວ
ມັນກໍ່　ແປງຄຳດີ　　ຕໍ່ອຸມລືວເຈົ້າ
ມັນກໍ່　ແປງກ້ອນກຽງ　　ລວງພາງລຽວໂລບ
　　　　ເວົ້າຈອຍ ໆ　　ເພືອນດານດັງນີ
ມັນກໍ່　ຈັດມໍ່ເຂົ້າ　　ທຳສ່ຽວໃຫ້ເປັນເກີ
　　　　ສະຫາຍຫາກມີອາຄົມ　　ຮຽກເອົາດາໄດ້
ຂ້າກໍ່　ມານຳເຈົ້າ　　ພຣະສະຫາຍພ້ອມພໍ່　ກັນແລ້ວ
ຂັດນີ້　ຣາຈົ່ງຂອດມິດແກ້ວ　　ກັນໄວ້ຢ່າໄລ
　　　　ຕັ້ງແຕ່ນີ້　　ເຫົ້າຊົ່ວຊີວາວັນ　ສະຫາຍເຣີຍ
　　　　ຕາບວ່າມໍຣະນາຕາຍ　　ຈົງຄ່ອຍວາຍແພງແກ້ວ
　　　　ສອງກໍ່ນ່ຳຫ້ານ　　ຈາກັນຫຼາຍສິ່ງ

ຂອດນິດແກ້ວ . ກັນໄວ້ບໍ່ໄລ

ເຮົາຄ່ອຍ ຄືນໄປຫ້ອງ ຫາເມັ້ຽຫົວລູກ ຣາທ້ອນ

ສອງກໍ່ ຂົ້ນຂາບໄຫວ ແຖມຟ້າລ່ວງລົງ

ສອງກໍ່ພາກັນຜ້າຍ ນັກຄາພໍ່ຫ້ອງ . ທາງແລ້ວ

ຜີປ່າຕ້ານ ສະຫາຍແຫ້ວແຫ່ງຕົນ

ບັດນີ້ ເຮົາຈັກຟັນເອົາໄມ້ ມາສານຂ້າງບ່ອງ ສະຫາຍເຮີຍ

ເຮົາແຕ່ງຊູບພາກໄມ້ ໄປຕ້ອນລູກຣາ

ຄ້ອນວ່າແລ້ວ ຜີເລົ່າໄປຟັນ

ເອົາມາຈັກ ແຕ່ງແປງກໍ່ເລີຍແລ້ວ

ຜີປ່າຕ້ານ ຈາສ່ຽວສະຫາຍແພງ

ເຈົ້າຈົ່ງລອງເຂົ້າໄປ ຄິບທຳດູເຈົ້າ

ຢ້ານທີ່ ມັ່ນອອນແທ້ ຣຽມຈັກຄ່ອຍພຽມຜຸງ

ສາຍຄໍເອີ້ຍ ເຂົ້າໄປເບິເຈົ້າ

ແຕ່ນັ້ນ ເພັງກໍ່ຍືອຣະຍາດເຂົ້າ ທຳຄີບລອງດູ

ຜີກໍ່ສອງມືຈັບ ຕອກພົ້ນຄຽນໜົມ

ມັນກໍ່ ດັງໄຟໄວ້ ແປວແດງລົມລ່າບ

ຜີປ່າຕ້ານກູຊິຂ້າ ນິງແທ້ບໍ່ສົງ

ນິງຈັກ ມຸດມອດມຽນ ຕາຍຄອບນີກູ ແລ້ມໍ

ນິງຫາກທຳກັນໜັກ ບາບເວນສນອງໃຊ້

ອຸມລ້ວຕານ ຂໍພ້ອນອະນຸຍາດ ອວນທ້ອນ

ການເຈົ້າໝື່ນຊັ້ນ   ຂ້າຂໍຄ້ຳຊ່ວຍຊູ

ຜືປ່າຕ້ານ   ອຸມລິ້ວຂານຕອບ

ນິງຈັກ   ເອີາອ່ອນນ້ອຍ   ນາງແກ້ວຕ່າວຄືນ   ນັ້ນບໍ່

ຄັ່ນວາ   ນິງເອີາຄືນບໍ່ໄດ້   ຊິຟັນນອດຊີວາວັນ   ບໍ່ຢ່າແລ້ວ

ຄັ່ນວາ   ນິງຫາກເອີາຄືນມາ   ກໍ່ສ່ວນກູຊິວາງໄຫ້

ແຕ່ນັ້ນ   ອຸມລີວຕ້ານ   ຂໍໂດຍເຈົ້າສ່ຽວ   ຮຽ້ມຫ່ອມ

ຂ້າຂໍ   ຄິດໄຫ້ໄດ້   ໂດຍຕາມດັ່ງໃຈ   ແທ້ແລ້ວ

ຍາມນັ້ນ   ອຸມລີ້ວຮ້ອງ   ສຽງດັ່ງອ່ອນໆ   ມາເຍີ່

ຂວັນອ່ອນນ້ອຍ   ແພງລ້ານໄຫ້ຕ່າວຄືນ   ກ່ອນຫ້ອມ

ມາເຍີ່   ຂວັນແພງແກ້ວ   ເຊັ້ນມາສເນີເນດ   ແພງເຮີຍ

ນ້ອງຄ່ອຍມາຢູ່ສ້າງ   ໄຫ້ບຸນທ້າວເຫຼືອນງຳ

ຄ້ອນກ່າວແລ້ວ   ແພງເນດກໍ່ເລີຍຄືນ

ສິມໄວ້ຄືນ   ດັ່ງນອນຍາມນ້ອຍ

ຄາວນັ້ນ   ຜືປ່ານ້ອຍ   ຄຸມຄຽດເຕັ່ມໃຈ

ກຳມືຕີ   ຖືບທຳຫັ້ງຟອນ

ມັນກໍ່   ບາຍເອີາຄ້ອນ   ມາຕີກຳຟາດ

ຂິນຫຼົ້ມຟັງ   ເນີາບາສົ່ນສາຍ

ມັນກໍ່   ຮຸນແຮງແລ້ວ   ມັນວາງປະປ່ອຍ

ມັນກໍ່   ຂໍເນືອຢູ່ຖ້ຳ   ຂໍເຈົ້າຢ່າກະທຳ

ຜືກໍ່   ຖາມເຖິງຜຽນ   ນຳມັນກ່ອຍກາວ

ອັນວ່າ ລົ້ມເຂັດນັ້ນ    ມີແຫ້ດົ່ງໃດ ນັ້ນເດ
ອຸມລົ້ວຕານ    ດອນຜີຄຳມ່ອນ
ອັນວ່າ ລົ້ມຂ້ອຍນັ້ນ    ມີແຫ້ຕ່າງກັນ
ອັນວ່າ ຊິວຫາລົ້ມ    ມີຈິງສາມແວ່ ສະຫາຍເຮີຍ
ນິງຈົ່ງ ແຍ່ອອກຫ້ອນ    ພຣະກູແກ້ວໄຄ່ເຫັນ
ມັນກໍຂືນບໍ່ໄດ້    ແຍ່ອອກມາເປືອງ
ຜີກໍ ເຣວພລັນຕັດ    ປ້າດເສັງເລີຍແລວ
ກູມີ້ ຫັນນະຊາດເຊື້ອ    ແກ້ວແກ່ນພຍາຜີ້ ແທ້ແລ້ວ
ຕາມແຕ່ ສັດຢູ່ໃນໂລກີ    ບໍ່ຣອນລອນນີ້ຫາວ
ນິງຢ່າຫງ້ານ    ທຳບາບປ່າປັງ ນັ້ນເນື້
ນິງຈົ່ງ ພີເນີອເນົາ    ຢູ່ພູຜາພຸມ
ຜີກໍແກ້ຕອກແລ້ວ    ປະປ່ອຍວາງໄປ
ຕາມພາສາ    ແຫ່ງມັນຈິງແທ້
ບ່າງກໍອົດບິນຜ້າຍ    ພີຈາກພຍາຜີ
ບ່າງຫາກພີໄປໄກ    ຣ່ອນໃດບໍ່ມີຮູ້
ຄ້ອນວ່າແລ້ວ    ບາເລົ່າຄືນມາ
ເຖິງບາຄານ    ພົ້ນຈາຕ້ານ
ຜີກໍເວົ້າພາກພົ້ນ    ຈາຕໍ່ບາຄານ
ຕາມຄຳມີ    ຊູ່ອັ້ນຜາຍຜຽນ
ຄ້ອນກ່າວແລ້ວ    ຫາວຣີບເຣວເນີອ

ເຖິງເມືອງແຖນ    ຢູ່ຟັງຄຳເວົ້າ
ບັດນີ້    ຈັກກ່າວພຍາແຖນເຈົ້າ ໂກທາກົ້ວໂກດ    ຈິ່ງແລ້ວ
ພູຈັກ    ລີງລຸ່ມຟ້າ    ຄອຍຢ້ຽມເບິ່ງດູ
ສູເລົ່າຢ່ານ    ດອຍເຫດສັນໃດ    ນັ້ນເດ
ມັນຈັກມີອາຄົມ    ດັ່ງລືເດເຈົ້າ
ໝື່ນ    ຂຸນເລີງເວົ້າ    ທູນອີງເວົ້າກ່າວ
ພຣະຈັກ    ທຳເຫດດອຍ    ໃດແທ້ດັ່ງໃຈ
ແຖນຫຼວງຕານ    ຂຶ້ນບອກຕາມມີ
ພູຈັກ    ທຳຣິດທີ່ໃຫ້    ເປັນຣຸງລ່ອງລີງ
ຄັ່ມວາ    ສີໄວແກວ    ນາງງາມສະເດັດອອກ    ມານັ້ນ
ພູຈັກ    ເທາະທອບຂູມ    ເອົາໄດ້ດັ່ງລືມ
ຄັ່ມວາ    ນາງຄານນ້ອຍ    ສີນໄວ້ມັນຂໍ່ອອກ    ມານັ້ນ
ພຣະຈັກ    ທຳເຫດດອຍ    ໃດໄດ້ດັ່ງໃຈ    ນັ້ນເດ
ແຖນຈິ່ງເວົ້າອາດຂ້    ດອນຂຸນຄຳຊື່
ພູຈັກ    ຈັບຢູ່ລີ້    ຫຼັງເຫົ້າທີ່ແປ    ທັ້ນແລ້ວ
ຄັ່ມວາ    ນາງຄານນ້ອຍ    ທຽວອອກໄປຊານ    ດັ່ງນັ້ນ
ພູຈັກ    ເຣວພັນລີ້ງ    ຫອບເອົາໃຫ້ຈີນໄດ້
ຄອນວ່າ    ແຖນກ່າວແລ້ວ    ຜີປ່າລາລີ້ງ
ເຖິງຂາຄານ    ພົ້ນຈາຕານ
ບັດນີ້    ຈັກກ່າວເຖິງແຖນຫຼວງເຈົ້າ ຄອງສວັນເທວະໂລກ ກ່ອນແລ້ວ

ວ່າຈັກ ນິຣະມິດເປັ້ນຣູປຮຸງ ບົນຜ້າຍເຜີ່ນລີງ ແຫ້ແລ້ວ
ເຮົາຈຶ່ງ ເດົາດາທາງ ແປງດີແອນຂນາດ ເຮອທ່ອນ
ຄັ້ງນີ້ ການເຮັ່ງຮ້ອນ ຣະວັ້ງໄວ້ໃຫ້ດີ
ຄ້ອນວ່າແລ້ວ ຂ້າຣີບແປງວຽງ
ຕີຕາແຫຼວ ຈອດເຈືອກັນໄວ
ແລ້ວເລົ່າ ກາງຄືນຂ້ອງ ແປງດີທຸກແຫ່ງ
ຢ່າກໍເອົາງາດຳ ຫວ່ານໄປຣະວັງໄວ້
ແລ້ວຈຶ່ງ ເອົາເຖົ້າຂື້ນ ແປເຮືອນເຈືອຈອດ
ທຸກທີ່ພ້ອມ ແປງໄວ້ແຕ່ງດີ
ຍາມນັ້ນ ແຖນຫຼວງຟ້າ ໂກທາກ້ອໂກດ
ພຣະກໍ ນິຣະມິດເປັ້ນຣູບຮຸງ ບິນແສ້ວເອີ້ນລີງ
ພຣະກໍ ບິນເອີ້ນຟ້າ ເທາະທອບປອນລີມ
ແລນາງຄານ ຄ່ອຍຊອນຫຼິງຢຽມ
ຜີກເບິ່ງນາງອ່ອນນ້ອຍ ຫຼອນອອກມາຊານ ດັ່ງນັ້ນ
ແຖນຈັກເຮືອນລີງ ຊູດເອົາໃຫ້ຈີນໄດ້
ແລ້ວຈຶ່ງ ບິນລ່ອງເຂົ້າ ແປເຮືອນຈັບຢູ່
ແຖນກໍ ເລີຍມື້ນລົ້ນ ເຊປັ້ນທ່າວລີງ
ຕີກເຖີງພື້ນ ທໍຣະນີນອນຢູ່
ວ້າຍກ່ຳພ້າ ຜີນ້ອຍບໍ່ກົວ
ເຂົາກໍ ເອົາຍັງຄ້ອນ ໄປຕີຜລຽງຜ່າ

ແຖນກໍກັບເພດໃຫ້ ເປັນແບ້ພ່າວສູງ

ນິທັງ ເຊົາລັງພ້ອມ ໝອດຍາວຕົວອາດ

ສອງບໍ່ຊ້າ ຖືຄ້ອນໄລ່ຕີ

ມັນບໍ່ຊ້າ ເຕັ້ນໄຕ່ໄປມາ

ຄຸງຕາແຫຼວ ລຽບນ້ຳແຄມຮົ້ວ

ເລີຍເລົ່າ ຄາຕາຮົ້ວ ຖືກໄຍບວງບາດ

ອ້າຍກ່ຳພ້າ ເລີຍເຂົ້າລອດກຸມ

ຜີປ່ານ້ອຍ ເຮອຣີບພັນໄປ

ຖືຕະບອງເພັດ ຟາດຕີແຖນເຖົ້າ

ແບ້ກໍຮ້ອງ ສຽງແຜດເຄັ້ງໆ

ເຂົາກໍເອົາໄປຂັງ ຄອກຫຼຸ້ຕັນໄວ

ກໍຫາກ ຫຼາຍຄືນໄດ ສາມວັນມາຮອດ

ແຖນກໍທົ້ງທຸກຮ້າຍ ເຫຼືອລົ້ນເວທນາ ແທ້ແລ້ວ

ອັນນີ້ ເປັນດ້ວຍຕັນທ້າຣອນ ໂລພາມັກງ່າຍ ຈິງແລ້ວ

ໂມທັງຈັບຈ່ອງໄວ້ ກັນຊ້ຳແລ່ນຖິ້ມ

ຄວາມມັກປັກຢູ່ໝັ້ນ ບໍ່ຫາຍໂລບໂລພາ ນັ້ນແລ້ວ

ອັນທີໂລກາເຣີຍ ຄ່ອຍຮ່ຳເພີງດູທ້ອນ

ບັດນີ້ ຈັກກ່າວເຖິງຣາຊາຂ້າ ພູ້ສູງອ້າຍກ່ຳ ກ່ອນແລ້ວ

ເມັ່ງກໍເຈັບປ່ອຍຮ້າຍ ຫຼາຍນັ້ບໍ່ດີ

ເຂົ້າກໍ ເອົາຜີ້ມພ້ອມ ທໍ່ຫຸ້ມຄູມລີກ ດູນັ້ນ

ຜໍ່ວາ ຈັກກິນແບ້ພ່າວເຖົ້າ ຕາມເຊື້ອສືບມາ
ເຂົາກໍ່ ໄປຊອກຊື້ ຕາມເຂດຄາເມ
ຍົນ ໆ ເຂົາ ຣີບໄປຍາມເຊົ້າ
ເຂົາກໍ່ ເລີຍລ່ວງເຂົ້າ ເມືອງໃຫ່ຍສາວັດຖີ
ເຂົາກໍ່ ຍົນໆໄປ ທົ່ວແດນນະຄອນກວ້າງ
ເລີຍລ່ວງເຂົ້າ ລຽບຂອບຕີນອຸ້ງ
ກໍ່ຈຶ່ງ ເຖິງເຮືອນຂາ ເລົ່າຖາມຫາແບ້
ຜີ່ປ້ານອຍ ຂານຕອບຄຳງ້າມ
ແພະເຮົານີ້ ຄອກຂັງຂັ້ນໄວ້
ອັນວ່າ ແພະເຈົ້ານັ້ນ ນີ່ຄາປານໃດ ນັ້ນເດ
ທ່ານຈົ່ງເບິ່ງຣາຄາ ນອບມາໃຫ້ພໍຮູ້
ລຸງເຮີຍ ແພະຂ້ອຍນີ້ ຣາຄາສູງເຫຼືອຂນາດ ຈິງແລ້ວ
ວ່າຈັກ ເອົາສອງພັນຄຳ ຈຶ່ງສົມຄວນແທ້
ຂ້ອຍກໍ່ ຂໍນຳເຈົ້າ ຣາຄາລົງກ່ອນ ຫຼານເຮີຍ
ຂໍໃຫ້ພັນຫ້າຮ້ອຍ ຄຳເຂັ້ມນອບນີ້
ທ້າວກໍ່ ຍອມຄວາມແລ້ວ ຈິຂາຍໄປໃຫ້ຂາດ
ແພະນັ້ນ ຂໍໃຫ້ເປັນແພະເຈົ້າ ເສັ້ງແລ້ວກໍ່ຊ່າງມັນ
ອັນວ່າ ຄຳພັນຫ້າ ຈິເປັນຫີນກໍ່ຕາມຊ່າງ ລຸງເອີ່ຍ
ແພະນັ້ນ ຂໍໃຫ້ເປັນແພະເຈົ້າ ວັນນີ້ຂາດກັນ
ທໍ່ວ່າ ແພະຂ້ອຍນີ້ ຮ້າຍເຊືອກເຕັມທີ ແທ້ແລ້ວ

ລຸງຈຶ່ງຫາເຄືອເຂົາ   ເຊືອກດີໃຫ້ມັນໝັ້ນ
ຜີປ່ານ້ອຍ   ໄຂຄອກແວນເປື້ອງ
ເອົາອອກມາ   ມອບມອມວາງໃຫ້
ເຂົາກໍ   ເອົາຄໍາໃຫ້   ຂາຄ້າມຍື່ນ
ວາງມອບໃຫ້   ຂາທ້າວທ່ຽງຈິງ
ຂ້າໄດ້ແບ້   ຍິນຊື່ນເພີງໃຈ
ເຂົາກໍ   ເອົາຍັງແພະ   ດ່ອນໄປມື້ຊາ
ເລີຍລ່ອງເຂົ້າ   ເຖິງປ່າໄພສິນ
ພາກັນເດີນມັກຄາ   ຕ່າວຄືນເມືອບ້ານ
ເຂົາກໍ   ຈູງແພະເຂົ້າ   ເດີນໄປກໍ່ພໍ່ທ່ອງ   ທາງແລ້ວ
ກໍເລົ້າເຈັບປວດທ້ອງ   ເຂົາຫັ້ນປ່າຊາງ
ເຂົາກໍ   ຜູກແບ້ໄວ້   ກາງທີ່ຫີນທາງ
ຂາກໍເຣີມປີບ   ແລ່ນໄປພາຍໃຕ້
ກໍທາກ   ພໍປະມານແລ້ວ   ແພະໃຫ່ຍເຣີມ
ແພະກໍ   ທະຍານຕີນຜັ້ນ   ເຜັ່ນພະໂຍນຍັງຟ້າ
ແຖນກໍ   ເຄັ້ງ ໆ ຕ້ານ   ຫ້າຍປະການທຸກສິ່ງ   ຈິງແລ້ວ
ໃພ່ຢາ   ໄດ້ກ່າວຕ້ານ   ຄໍາກ້າອວດທານ   ແຫ້ເນື່
ແມ່ນວ່າ   ກູພຣະອົງທ້າວ   ທົ່ງຣິດທີ້ຈົບເພດ   ປາງນັ້ນ
ເຂົາກໍຍັງເລົ້າໄດ້   ພຣະກູທ້າວສແນ່ງວາຍ
ແຖນກໍກົວເກງຢ້ານ   ຂາຄານອັປໂສກ   ເສັ້ງແລ້ວ

ພຣະບໍ່ມີກ່າວກ້າ ຈາຕ້ານຕໍ່ໄປ

ບັດນີ້ ຈັກກ່າວເຖິງຂ້ານັດແປ້ ໄວ້ທີ່ຫີນທາງ ກ່ອນແລ້ວ

ເຂົາກໍ່ງົມງວາມາ ລວດບໍ່ເຫັນຍັງແປ້

ເຊົາກໍ່ຈັບລຸບໄມ້ ເຊືອກຂາດເປັນກະຈ້ອນ

ຫງາກໍ່ຍັງບໍ່ເຫັນກິນ ລຽບເບິ່ງຮອຍກໍ່ຫາຍຈ້ອຍ

ໂອນໍ່ ອັດສະຈັນໃຈເດ ເຊືອກສາມແກ່ວມາເລົ່າຂາດ ເສັ້ຽນີ້

ມັນຈັກເດີນຖຸ່ງດົ້ນ ໄປແທ້ທີ່ໃດ ນັ້ນເດ

ຄ້ອນວ່າ ຂ້າຈົ່ມແລ້ວ ມັນຄຽດຄຸງໃຈ

ມັນຫາກເສັຽແພະໄປ ຢູ່ທີ່ໃດບໍ່ມີຮູ້

ບັດນີ້ ເສັຽຫົວສົ້ນ ທັງທີຊ້ຳພັດຈຸ່ມ ເສັຽແລ້ວ

ທຸກແລ້ວຊ້ຳຕື້ມໄຮ້ ແຮງຊ້ຳຂມອດໄປ

ມັນຫາກ ມີປີກເພືອນດັ່ງຮຸ້ງ ຈິເຫາະຫອບຫ້ະຍ່ານພີ ນັ້ນລີ

ມັນຈັກໄປທາງໃດ ບໍ່ເຫັນຮອຍແທ້

ກໍ່ຫາກ ເຈົ້ບອົກໂອ ຈິເສັ້ຽຂອງດາຍເປົ່າ ແລນໍ່

ບໍ່ອາດໄປກ່າວເວົ້າ ນຳທ້າວຕ່າວຄືນ

ຄ້ອນກ່າວແລ້ວ ເຂົາເລົ່າເລີຍພີ້

ເຖິງເຮືອນເຕົ້ມ ຢູ່ເຫງົາສເນີ້ໄຂ

ຝູງໝູ່ ອ້າຍກ່ຳພ້າ ຜີປ່າເຢັນໃຈ ກ່ອນແລ້ວ

ອັ່ນວ່າ ຝູງໂພຍພັຍ ກໍ່ເລົ່າຫາຍເສັຽສ້ຽງ

ບາບໍ່ເຄືອງຄຳຮ້ອມ ອົ້ນຕາຍກໍ່ຫາຍສ່ວາງ

ຢູ່ຫ່າງ  ສຸກສືບສ້າງ  ເຮືອນຢ້າວຢູ່ສຳຣານ
ອັນວ່າ  ຜີ່ປ່ານ້ອຍ  ຕ້ານສັ່ງບາຄານ
ຂ້ອຍຈັກລາພູທ້ອນ  ຕ່າວຄືນຫາຖ້ຳ
ຄ່ອຍຢູ່ດີເຍີ  ມ້ະຫາກະສັດອ້າຍ  ຈົງສົງ ງົມເຈົ້າພີ່  ຄ່ອຍຢູ່ດີທ້ອນ
ນ້ອງຈັກໄປປ່າໄມ້  ຈົ່ມທົ້ມກົມລະອອງ
ຄ້ອນສັ່ງແລ້ວ  ຜີເລົາທະຍານໄປ
ເຖິງດົງດອນ  ຢູ່ດີຫາຍຮ້ອນ
ຈົບຂົດຂັ້ນ  ນໍທານທົ່ມເພີ່ມກາວ  ມານັ້ນ
ຄັນວ່າ  ຄຣົວພ້າກໍແລ້ວ  ເຊີນເຈົ້າອ່ານໄປ
ຊາດທີ່ເປັນຄົນນີ້  ຢ່ານອນເນີນໜົ່ມປມາດ  ບໍ່ດີດາຍ
ເນີນໜົ່ມນີ້  ເວນໃຊ້ບໍ່ນານ  ແທ້ແລ້ວ
ຟັງຍິນອາໂຍຍູ້  ຍານີ້ແຖໃກ້ຮູງ  ພຸ້ມເຍີ
ຮະດູປີປາຍ  ຖ່າຍນານີ້ຊາ
ກໍບໍ່ມີການຕ້ອງ  ຈະໝອງໜົ່ມພະຈົນນີ້
ມີແຕ່  ການກິນທານ  ສືບເມືອພາຍໜ້າ
ບັດນີ້  ຈັກກ່າວນັກຄະເຣດທ້ອງ  ເມືອງໄທຍ່ສາວັດຖີ  ກ່ອນແລ້ວ
ພານຈັກໄປເດີນດົງ  ຊອກຫາຄະນາເນື້ອ
ພານຈິ່ງຕ້ານສັ່ງນ້ອງ  ນາງນາດກັນລະຍາ
ພີ່ຈັກໄປເດີນດົງ  ຊອກຫາຄະນາເນື້ອ
ຄ້ອນສັ່ງແລ້ວ  ເຂົ້າປ່າໄພສົນ

ພານກໍເດີນດົງດ້ອນ ຄ່ວາໄປພາຍໜ້າ
ພານກໍໄປຫາໄດ້ ກະທິງເມີຍແລ້ວກັບຕ່າວ ມານັ້ນ
ມາຮອດບ້ານຍ່າເຖົ້າ ຈິ່ງເອົາຫັ້ນແວ່ເຊົາ
ກໍຈິ່ງ ເລີຍລ່ອງເຂົ້າ ເຖິງເຂດເຮືອນຍ້າ
ກໍຈິ່ງ ເຫັນນາງເຂັ້ນມາ ດັ່ງແມນມະຄອນຟ້າ
ມັນກໍລືມສະຕິຫຼົງ ຫຼົງໄປຄາວນຶ່ງ
ມັນກໍຊອດຮ່ຽງຮູ ສະຕິໄດ້ຈິ່ງຕ່າວຄືນ
ພານຈິ່ງເອົາຫາບຂັ້ນ ກັບຕ່າວຄືນມາ
ເຖິງເຮືອນຕື້ນ ຢູ່ຊົ້ມພາຍບ້ານ
ມັນຈິ່ງ ເມືອຂາບໄຫວ້ ທູນຣາຊເລ້ຽງໂຍ
ຕາມຄວາມມີ ຊູ່ອັນເອົາຕານ
ຍັງມີວັນນຶ່ງນັ້ນ ຊ້າກໍໄປທ່ຽວບ້ານ ພາຍນອກຕີນວຽງ ທີ່ພຸ້ນ
ຊ້າເຖົ້າເຫັນນາງງາມ ດັ່ງນາງມະຄອນຟ້າ
ທ່ວາ ອ້າຍກ່ຳພ້າ ນອນຮ່ອມນາງຄາມ ແທ້ແລ້ວ
ຮູບພະພັກຄືນາງແມນ ປ່ອນລົງແຕ່ເມືອງຟ້າ
ພຣະບາດເຈົ້າ ຟັງພາກສ່ານສຽງ
ພານກໍໄຂຄຳຈິງ ບໍ່ຫ່ອນມີກອນລ້ຽວ
ພຣະບາດເຈົ້າ ຟັງຖືກກໍໃຈອົກ ແທ້ແລ້ວ
ບັດນີ້ ຈັກເອົາຜົມໄປ ແວດຣະວັງໃຫ້ຈິນໄດ້
ຄ້ອນກ່ວາແລ້ວ ຄ້ອນຕ່ອຍຕີກຸ່ມ

ເສນາເຂົາ ຕື່ນຣີມທັງຄ້າຍ

ແມ່ນວ່າເສນາຂ້າ ໄຫຼມາເຕັງຣະດາດ

ເຂົາກໍ ຂົ້ນຂາບໄຫວ້ ທູນເຈົ້າຢູ່ຊະລອນ

ພຣະກ່າວຕ້ານ ຈາເຂົາທຸກໝູ່

ກູກໍຄິດຢາກໄດ້ ນາງແກ້ວພຣະຍອດຍິ່ງ

ຍັງມີຊາຍກຳພ້າ ຢູ່ນອກຕີນວຽງ ທີ່ພຸ່ມ

ອັນວ່າ ພັລຍາມັນ ຮູບງາມປານແຕ້ມ

ເຮົາກໍຄິດຢາກໄດ້ ເປັນນຶ່ງພັລຍາ ທ່ານເອີຍ

ສູ່ຈົງໄປນຳເອົາ ຢ່ານານດຽວນີ້

ແຕ່ນັ້ນ ເສນາເຈົ້າ ທັງຫຼາຍກອຍກ່າວ

ນົບນອບນົ້ອ ທູນເຈົ້າຊູ່ປະການ

ຝູງຂ້າຂໍດອນເຈົ້າ ພຣະຣາຊາຂໍກ່ອນ

ມັກປາດເພິ່ນວ່າໄວ້ ເອີນຊີໃຊ້ເນື່ອລຸ່ມ

ອັນນັ້ນ ຫາກແມ່ນບຸນຍາແລ້ວ ບໍ່ຄວນເຮົາຊິຊິງຍາດ

ເພິ່ນກ່າວມີທ່ຽງແທ້ ຂໍທ້ອນຢ່າກະທຳ

ອັນນຶ່ງ ນາງຫາກມີຄູ່ຊ້ອນ ທຽມພ່າງສາມີໂກ້ ແລ້ວເດ່

ເກງຈັກມີໂພຍພັຍ ຂາບເວນວຽນຕອງ

ເສນາທ່ານ ພຍາບໍ່ມີຟັງ

ຍັງໂກຫາບໍ່ເຊົາ ຈົ່ງເອົາໃຫ້ມັນໄດ້

ພຍາກໍ ໂມທັງຣອນ ຢາກນອນນຳເມັຽທ່ານ

ຄິດຮອດນາງບໍ່ແລ້ວ    ເປັນບ້າປ່ວງຊະເລ

ຄັນວ່າ ກູບໍ່ໄດ້ອອນນ້ອຍ    ບຸສແບ່ງເຂັນມາ ດັ່ງນັ້ນ

ແໜງທໍ່ ນໍ່ຣະນາຕາຍ    ຊາງກໍໃຈລາງແລວ

ເມື່ອນັ້ນ ແສນເມືອງເຈົ້າ    ສອງທີຊ່ຳກ່າວ

ເຣົາຈົ່ງ ພັນຕໍ້ຕົວ    ມັນແທ້ເບິ່ງດູ ກ່ອນທ່ອນ

ເຣົາຄ່ອຍ ເອົາເມືອງຕັ້ງ    ເປັນຂັນເສັ້ງສ່ຽງ ດູນັ້ນ

ຄັນແມ່ນ ເຣົາຫາກແພ້    ຈົ່ງເອົາມ້ອງຈົ້ງແມ່ນຄອງ

ເຣົາຄ່ອຍ ພັນຊ່ວງມາ    ຕີໄກ່ກິນຄວາຍ ເບິ່ງທອນ

ມັນຈັກເອົາກຸດໂຕ    ແຕ່ທີໃດເດເຈົ້າ

ຄັນວ່າ ຍັງບໍ່ແພ້    ຍຸກທັບໃຫຍ່ໄປເຕັງ ທັ້ນທ່ອນ

ເຣົາຄ່ອຍ ກຸມສະແຄງບິດ    ຜູກມັນຈົ່ງເອົາມອງ

ຕາເຫັນໃຈຢາກໄດ້    ກໍແຄ້ນຄັ່ງໃນທວງ ຢູ່ນັ້ນ

ເຣົາຈົ່ງເກມໂຍທີ    ຕໍ່ຕີໃຫ້ຈີນໄດ້

ຄ້ອນວ່າແລ້ວ    ພຣະຊື່ນຊົມບານ

ກໍ່ຈຶ່ງຈາເສນາ    ໃຫ້ຫ່ວທັ້ມຊາຍໄຣ້

ຍາມນັ້ນ ຂ້າມະຫາດຟ້າວ    ຣິບແລ່ນໄປໄວ

ເຖິງຊາຍທຸກ    ກ່າວຈາພອຍຸຕ້ານ

ບັດນີ້ ພຣະບາດເຈົ້າ    ທ່ານອອນບາຄານ

ວ່າໃຫ້ເມືອໂຮງທອງ    ຂາບທູນພຣະເມືອງເຈົ້າ

ເມື່ອນັ້ນ ອາຍກຳພ້າ    ຟ້າວຟັ່ງແອນເປືອງ

ບາກໍ່ເດົາດາດີ　　ຮີບເມືອນີ້ຊາ
ທ້າວກ່ຳພ້າ　　ຍິວຣະຍາດຕາມຊູ້
ບາບຸນເຮືອງ　　ຍ່າງເມືອເມືອງກວາງ
ຄັນວ່າ　ເຖິງທີ່ນທ້ອງ　　ສາວັດຖີນະຄອນຣາດ
ທ້າວກໍ່　ຂຶ້ນສູ່ຄຸມ　　ທູນເຈົ້າພຣະນັ່ງເມືອງ
ບັດນີ້　ພຣະບາດເຈົ້າ　　ແຄນຄັ່ງປະການໃດ　ນັ້ນເດ
ກໍ່ຈົ່ງທັນຣຽນມ່າ　　ຂ້າຍທູນພຣະເມືອງເຈົ້າ
ພຣະບາດເຈົ້າ　　ຕາມຕໍ່ຊາຍທູກ
ຕາມຄວາມມີ　　ຊູ່ອັນເອົາຕາມ
ບັດນີ້　ພູຈັກຍົ່ມາຕັ້ງ　　ຂັນພັ້ນຕັ້ງຕໍ່　ນິ້ງແລ້ວ
ຄັນວ່າ　ນີ້ງຫາກແພ້　　ພູຊິໃຫ້ມອບເມືອງ
ຄັນວ່າ　ພູຫາກແພ້　　ຊິເອົາອ່ອນເຂັ້ນມາ　ແທ້ແລ້ວ
ພູຈັກ　ເອົາມາເປັນເທວີ　　ນັ່ງປອງສເວີຍສ້າງ
ແມ່ນວ່າ　ອັນພ້າເຊົ້າ　　ເອົາໄກ່ພັນກັ້ນ　ເບິ່ງທອ້ນ
ນີ້ງຈົ່ງຫາມາໄວ　　ຢ່ານານອັນພ້າ
ອັນທີ່ຄຳພູເວົ້າ　　ສັດຈັງທັດທ່ຽງ　ຂາເອີ່ຍ
ນີ້ງຈົ່ງ　ຫາໃຫ້ທັນສັນຍາ　　ຢ່າໃຫ້ກາຍຍາມນັ້ນ
ຄອນວ່າ　ພຣະກ່າວແລ້ວ　　ຂາເລີກລາໜີ
ເຖິງເຄຫັງ　　ຢູ່ຕອນເຕັງກັ້ນ
